ພະຍາກອນ ອຽງຈັນ
20–28°C
ວັນອັງຄານ 24/11 · ເມກບາງສ່ວນ

# ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນອັງຄານ 24 ພະຈິກ 2026 · ສະບັບທີ 028 | ສະຫຼຸບຂ່າວປະຈຳວັນຈັນ 23 ພະຈິກ 2026 · 24 ຂ່າວ | 20 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ ຂ່າວຕ່າງປະເທດ · 16:40 ໂມງ · ອ່ານ 205 ຄັ້ງ

## ເມຍຈັບໄດ້ຜົວນອກໃຈ! ສຸດທົນຈ້າງລົດແມັກໂຄຣ ມາທຸບເຮືອນ ທີ່ສ້າງມາດ້ວຍເຫື່ອແຮງ ຈົນມຸ່ນທັງຫຼັງ



ເຫດເກີດທີ່ປະເທດອິນໂດເນເຊຍ ວັນທີ 11 ພະຈິກ 2026 ຫຼ້ານີ້ມີລາຍງານວ່າ ຍິງສາວຄົນໜຶ່ງຊື່ ມຸສລິມະ ອາຍຸ 37 ປີ ຈັບໄດ້ວ່າສາມີຂອງຕົນນອກໃຈ ຈຶ່ງຕັດສິນໃຈບໍ່ຂໍອົດທົນອີກຕໍ່ໄປ ແລະຈ້າງລົດແມັກໂຄຣມາຮື້ຖອນເຮືອນທີ່ສ້າງມາດ້ວຍເງິນ ແລະເຫື່ອແຮງຂອງຕົນ ຈົນມຸ່ນລົງທັງຫຼັງເຫລືອແຕ່ຊາກ.

ຕາມລາຍງານຂ່າວ ເຫດການດັ່ງກ່າວເກີດຂຶ້ນໃນແຂວງລໍາປຸງ ປະເທດອິນໂດເນເຊຍ. ໂດຍເຮືອນຫຼັງດັ່ງກ່າວເປັນເຮືອນທີ່ນາງໃຊ້ເງິນທີ່ຫາມາດ້ວຍນ້ຳພັກນ້ຳແຮງໃນການກໍ່ສ້າງ ແຕ່ຕັ້ງຢູ່ເທິງທີ່ດິນຂອງພໍ່ແມ່ຝ່າຍ

ຕໍ່ໜ້າ 2

◆ ເຫດການ · 16:23 ໂມງ

## ນໍາຕົວອາວ ທົດສະກໍາຄືນຄະດີຄາດຕະກໍາຫຼານຊາຍ! ປົ້ມເຫດນັ່ງດື່ມເຫຼົ້າຂາວແລ້ວຜິດຖຽງກັນຮຸນແຮງ ຢູ່ເມືອງທ່າແຂກ ແຂວງຄໍາມ່ວນ



ເມື່ອວັນທີ 19 ພະຈິກ 2026 ທີ່ຜ່ານມາ, ເຈົ້າໜ້າທີ່ ປກສ ເມືອງທ່າແຂກ ແຂວງຄໍາມ່ວນ ໄດ້ນໍາຕົວ ທ້າວ ດ້າຍ ໄຊຍະວົງ ອາຍຸ 73 ປີ ລົງເຮັດແຜນທົດສະກໍາຄືນປະກອບຄໍາຮັບສາລະພາບ ໃນຄະດີຄາດຕະກໍາ ທ້າວ ວົງໄຊ ໄຊຍະວົງ ອາຍຸ 45 ປີ (ເຊິ່ງມີສັກເປັນຫຼານຊາຍ) ຢູ່ທີ່ເຂດບ້ານກຸງສີ ເມືອງທ່າແຂກ ແຂວງຄໍາມ່ວນ.

ຕໍ່ກັບເຫດການດັ່ງກ່າວ, ເຈົ້າໜ້າທີ່ໃຫ້ຮູ້ວ່າ: ໃນວັນທີ 6 ຕຸລາ 2026, ກອງບັນຊາການ ປກສ ເມືອງທ່າແຂກ ໄດ້

ຕໍ່ໜ້າ 2

### ໃນສະບັບນີ້

2 ຂ່າວຕ່າງປະເທດ
2 ຂ່າວພາຍໃນ
9 ເສດຖະກິດ-ສັງຄົມ
10 ເຫດການ
11 ໄລຟ໌ສະໄຕລ໌
19 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
20 ກິລາ



◆ ຂ່າວພາຍໃນ · 15:58 ໂມງ

### ສານຕັດສິນຈຳຄຸກຕະຫຼອດຊີວິດ ອະດີດຜູ້ອຳນວຍການໃຫຍ່...

ອ່ານໜ້າ 2 ▸



ກໍລະນີຖືກມີລ້ວງກະເປົ໋າ

◆ ຂ່າວພາຍໃນ · 11:24 ໂມງ

### ເຕືອນໄພ! ຍິງສາວຖືກລ້ວງກະເປົ໋າກາງຖະໜົນ ບຸນພະທາດຫຼວງ ເ...

ອ່ານໜ້າ 4 ▸



◆ ຂ່າວພາຍໃນ · 13:02 ໂມງ

### ທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ຈະ...

ອ່ານໜ້າ 4 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

**ເມຍຈັບໄດ້ຜົວນອກໃຈ! ສຸດທົນຈ້າງລົດແມັກໂຄຣ ມາທຸບເຮືອນ ...** (ຕໍ່ຈາກໜ້າ 1)

ສາມີ.

ພາຍຫຼັງເກີດບັນຫາຄວາມສຳພັນ ແລະມີລາຍງານເລື່ອງສາມີນອກໃຈ ນາງຈຶ່ງຕັດສິນໃຈຣື້ຖອນເຮືອນຫຼັງນີ້ ໂດຍມີລາຍງານວ່າທັງສອງຝ່າຍໄດ້ຕົກລົງກັນກ່ອນດຳເນີນການ.

ເຫດການນີ້ກາຍເປັນປະເດັນທີ່ຖືກວິພາກວິຈານໃນໂລກອອນລາຍ ໂດຍຫຼາຍຄົນສົນໃຈວ່າ ເຮືອນທີ່ສ້າງມາດ້ວຍເຫື່ອແຮງ ສຸດທ້າຍກັບຕ້ອງຖືກທຸບຖິ້ມ ເພາະບັນຫາຄວາມຮັກໃນຄອບຄົວ.

ທີ່ມາ: Liputan (ສື່ຂ່າວອິນໂດເນເຊຍ)

**ນຳຕົວອາວ ທິດສະນຳຄົນຄະດີຄາດຕະກຳຫຼານຊາຍ! ປົມເຫດນັ່ງ...** (ຕໍ່ຈາກໜ້າ 1)

ຮັບແຈ້ງຈາກອຳນາດການປົກຄອງບ້ານກຸງສີ ວ່າມີເຫດການຄາດຕະກຳເກີດຂຶ້ນ. ຈຶ່ງໄດ້ແຕ່ງຕັ້ງກຳລັງວິຊາສະເພາະສົມທົບກັບພາກສ່ວນກ່ຽວຂ້ອງລົງຊັນນະສູດສະຖານທີ່ເກີດເຫດ ພົບຜູ້ເສຍຊີວິດ 1 ຄົນ ຊື່ ທ້າວ ວົງໄຊ ໄຊຍະວົງ ອາຍຸ 45 ປີ ປະຊາຊົນບ້ານດົງພູ້ ເມືອງໄຊບຸລີ ແຂວງສະຫວັນນະເຂດ ສະພາບຮ່າງກາຍຖືກແທງດ້ວຍຂອງມີຄົມຢູ່ບໍລິເວນກ້ອງນົມຂ້າງຊ້າຍ 2 ຈຸດ ແລະ ສ່ວງຂ້າງເບື້ອງຂວາ 1 ຈຸດ. ສ່ວນຜູ້ລົງມືກໍ່ເຫດ (ເຊິ່ງເປັນອາວຂອງຜູ້ເສຍຊີວິດ) ຊື່ ທ້າວ ດ້າຍ ໄຊຍະວົງ ອາຍຸ 73 ປີ ປະຊາຊົນບ້ານກຸງສີ ເມືອງທ່າແຂກ ແຂວງຄຳມ່ວນ ເຊິ່ງຖືກ ປກສ ບ້ານຄວບຄຸມຕົວໄວ້ໄດ້ ພ້ອມຂອງກາງມີດປາຍແຫຼມ ດ້າມສີນ້ຳຕານ ຍາວ 30 ຊັງຕີແມັດ.

ສາເຫດ ແລະ ຄຳຮັບສາລະພາບຂອງຜູ້ກໍ່ເຫດ

ຜ່ານການສືບສວນ-ສອບສວນ, ທ້າວ ດ້າຍ ໄຊຍະວົງ ໄດ້ຮັບສາລະພາບວ່າ: ໃນວັນທີ 5 ຕຸລາ 2026, ຕົນເອງ ແລະ ຜູ້ເສຍຊີວິດ ໄດ້ນຳເອົາຫວາຍທີ່ໄປຊອກຫາຮ່ວມກັນຈຳນວນ 34 ກິໂລ ໄປຂາຍໃນລາຄາກິໂລລະ 25,000 ກີບ ລວມເປັນເງິນ 850,000 ກີບ. ພາຍຫຼັງໄດ້ເງິນແລ້ວ ທັງສອງໄດ້ພາກັນໄປຊື້ເຫຼົ້າຂາວຈຳນວນ 1 ຕຸກ (ລາຄາ 20,000 ກີບ) ມານັ່ງດື່ມຢູ່ເຮືອນຂອງ ທ້າວ ດ້າຍ ໄຊຍະວົງ.

ຈົນຮອດເວລາປະມານທ່ຽງຄືນຂອງວັນດຽວກັນ, ທັງສອງມີອາການມຶນເມົາສົມຄວນ ແລະ ໄດ້ເກີດການຜິດຖຽງກັນ ໂດຍຜູ້ເສຍຊີວິດໄດ້ເວົ້າອວດອ້າງວ່າຕົນເອງເຄີຍເປັນທະຫານສືບຂ່າວ ມີຄວາມຮູ້ຄວາມສາມາດທາງດ້ານການຕໍ່ສູ້. ທ້າວ ດ້າຍ ຈຶ່ງເວົ້າຂັດຂຶ້ນວ່າບໍ່ມັກຄົນຂີ້ໂມ້ ເຮັດໃຫ້ຜູ້ເສຍຊີວິດບໍ່ພໍໃຈ ລຸກຂຶ້ນໃຊ້ຕີນເຕະໃສ່ໃບໜ້າເບື້ອງຂວາຂອງ ທ້າວ ດ້າຍ 4-5 ບາດ ຈົນລົ້ມລົງພື້ນ ແລະ ໃຊ້ຕີນຢຽບໃບໜ້າອີກ 4 ບາດ. ດ້ວຍຄວາມໂມໂຫ, ທ້າວ ດ້າຍ ຈຶ່ງຈັບເອົາມີດປາຍແຫຼມຢູ່ກ້ອງໝອນບ່ອນນອນທີ່ຢູ່ໃກ້ຄຽງ ແທງສວນກັບໃສ່ບໍລິເວນທ້ອງ ແລະ ໜ້າເອິກຂອງຜູ້ເສຍຊີວິດຈຳນວນ 3 ບາດ. ຈາກນັ້ນ ທ້າວ ດ້າຍ ກໍໄດ້ລົ້ມນອນຍ້ອນອາການມຶນເມົາສ່ວນ ທ້າວ ວົງໄຊ ແມ່ນໄດ້ໄປນອນເສຍຊີວິດຢູ່ເຮືອນຄົວ ຈົນຮອດຕອນເຊົ້າວັນທີ 6 ຕຸລາ 2026 ຈຶ່ງມີການແຈ້ງເຈົ້າໜ້າທີ່ເຂົ້າຄວບຄຸມຕົວ.

ປັດຈຸບັນ, ເຈົ້າໜ້າທີ່ວິຊາສະເພາະກຳລັງສະຫຼຸບຂໍ້ມູນ, ພະຍານ, ຫຼັກຖານ ແລະ ສຳນວນຄະດີ ເພື່ອສົ່ງໃຫ້ພາກສ່ວນກ່ຽວຂ້ອງດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍຕໍ່ໄປ.

ພາບ-ຂ່າວ: ນິວອນ

ທີ່ມາ: ລາຍການ ຄວາມສະຫງົບ ແຂວງຄຳມ່ວນ

## ข่าวพายใน


**ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ**

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

**ລົງໂຄສະນາ ໃນ ມະຫາສານ ລາຍວັນ**

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 15:58 ໂມງ · ອ່ານ 36 ຄັ້ງ

# ສານຕັດສິນຈຳຄຸກຕະຫຼອດຊີວິດ ອະດີດຜູ້ອຳນວຍການໃຫຍ່ພະນັກງານລັດ ວິສາຫະກິດໄຟຟ້າລາວ ຂໍ້ຫາສໍ້ລາດບັງຫຼວງ ຜົນເສຍຫາຍ 31.200.000 ກວ່າ ໂດລາ



ໃນວັນທີ 23 ພະຈິກ 2026, ທ່ານ ນາງ ລິນດາມອນ ສີດາພອນ ຮັກສາ ການ ຫົວໜ້າຫ້ອງການສານປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ຖະແຫຼງການ ກ່ຽວກັບການຕັດສິນຄະດີ ການສໍ້ລາດ ບັງຫຼວງ 2 ຈຳເລີຍ ເປັນອະດີດພະນັກງານ ລັດວິສາຫະກິດໄຟຟ້າລາວ ເຊິ່ງມີເນື້ອໃນ ດັ່ງນີ້:

ໃນວັນທີ 20 ພະຈິກ 2026 ຄະນະສານອາຍາຂອງສານປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ນຳເອົາຄະດີ ການສໍ້ລາດບັງຫຼວງ ອອກມາພິຈາລະນາ 1 ເລື່ອງ, ເຊິ່ງມີຈຳເລີຍຈຳນວນ 2 ຄົນ ຄື:

+ ທ້າວ ສີສະຫວາດ ທິຣາວົງ ອາຍຸ 67 ປີ, ອະດີດ ຜູ້ອຳນວຍການໃຫຍ່ ລັດ ວິສາຫະກິດໄຟຟ້າລາວ, ປັດຈຸບັນຢູ່ບ້ານສີ ສະຫວາດ ເມືອງຈັນທະບຸລີ ນະຄອນ ຫຼວງວຽງຈັນ ( ຈຳເລີຍ 1 ).

+ ທ້າວ ຄຳ ມິ່ງບຸບຜາ ອາຍຸ 57 ປີ ອະດີດຫົວໜ້າຫ້ອງການສຶກສາສຳຫຼວດ-ອອກແບບສາຍສົ່ງ ລັດວິສາຫະກິດໄຟຟ້າ ລາວ, ປັດຈຸບັນຢູ່ບ້ານສີຊຶມຊຸ່ນ ເມືອງສີ ໂຄດຕະບອງ ນະຄອນຫຼວງວຽງຈັນ ( ຈຳ ເລີຍ 2 )

ທັງສອງຖືກຫາວ່າ: ການສໍ້ລາດ ບັງຫຼວງ, ການຟອກເງິນ ແລະ ການ ປອມແປງເອກະສານ ຫຼື ນຳໃຊ້ເອກະສານ ປອມ ຖືກກັກຕົວວັນທີ 25 ກໍລະກົດ 2025.

ໃນປີ 2013 ພວກຈຳເລີຍ ໄດ້ຈ້ຽ ໃຈນຳສະເໜີໂຄງການກໍ່ສ້າງສາຍສົ່ງ 230 ກິໂລວັດ ທ່າວຽງ-ຫຼັກ20, 115 ກິໂລວັດ ນ້ຳໄຜ-ທົ່ງຄູນ 2 ຕາມໜັງສືສະເໜີ ເພື່ອຂໍ ອະນຸຍາດໃຫ້ພາກສ່ວນຕ່າງໆອຳນວຍ ຄວາມສະດວກກ່ຽວກັບໂຄງການດັ່ງກ່າວ ເຊັ່ນ: ການຮັບຮອງເອົາແຜນນຳເຂົ້າ ອຸປະກອນໄຟຟ້າ (Master List) ເພື່ອ ຮັບໃຊ້ໂຄງການ ທັງທີ່ວ່າ ໂຄງການດັ່ງກ່າວ ຍັງບໍ່ທັນໄດ້ສຶກສາຄວາມເປັນໄປໄດ້ຂອງ ໂຄງການ, ບໍ່ມີແບບກໍ່ສ້າງ, ບໍ່ມີບ່ອນອີງໃນ ການຄິດໄລ່ບໍລິມາດວຽກ ແລະ ຫົວໜ່ວຍ ລາຄາ, ແຕ່ພວກຈຳເລີຍ ກໍຍັງສະເໜີເອົາ ອຸປະກອນໄຟຟ້າເຂົ້າແຜນນຳເຂົ້າ ( Master List) ແລະ ນຳເຂົ້າຈຳນວນ ຫຼວງຫຼາຍ ເປັນຕົ້ນແມ່ນ ສາຍໄຟຟ້າ ຕາມ ແຜນນຳເຂົ້າ (Master List) ຂອງ ໂຄງການກໍ່ສ້າງສາຍສົ່ງ 230 ກວ ທ່າວຽງ-ຫຼັກ20 ຈຳນວນ 3,546 ໂຕນ ເປັນເງິນ 20,517,439.68 ໂດລາສະຫະລັດ (ຊາວລ້ານຫ້າແສນໜຶ່ງ ໝື່ນເຈັດພັນສີ່ ຮ້ອຍສາມສິບເກົ້າຈຸດຫົກສິບແປດເຊັນ ໂດລາສະຫະລັດ) ຕາມ (BOQ) ແມ່ນ 2,800 ໂຕນ ເປັນເງິນຈຳນວນ 16,201,024 ໂດລາສະຫະລັດ ແຕ່ ກໍ່ສ້າງຕົວຈິງມີພຽງແຕ່ 1,942 ໂຕນ ເປັນ ເງິນຈຳນວນ 11,236,567.36 ໂດລາ ສະຫະລັດ, ຊຶ່ງຜິດດ່ຽງ 1,604 ໂຕນ ເປັນເງິນຈຳນວນ 9,280,872.32 ໂດລາສະຫະລັດ.

ຈາກນັ້ນ ພວກຈຳເລີຍ ໄດ້ ຮ່ວມກັນດັດແກ້ມູນຄ່າໂຄງການດັ່ງກ່າວ ຂຶ້ນເປັນຈຳນວນ 198,827,000 ໂດລາ ສະຫະລັດ ເພື່ອໃຫ້ໄດ້ເງິນຝາກກູ້ເຂົ້າມາ ຕື່ມອີກ ໂດຍໄດ້ດັດແກ້ສັນຍາເພີ່ມເປັນຈຳ ນວນ 159,671,381 ໂດລາສະຫະລັດ (ຈາກສັນຍາເດີມ ມູນຄ່າ 155,073,328.41 ໂດລາສະຫະລັດ ແລະ ໄດ້ນຳເອົາເງິນຝາກກູ້ເຂົ້າມາ ຈຳນວນ 43,755,618 ໂດລາສະຫະລັດ; ໃນນີ້ ຈ່າຍເຂົ້າໃນສັນຍາດັດແກ້ ຈຳນວນ 4,600,000 ໂດລາສະຫະລັດ ແລະ ຈ່າຍແກ້ໄຂສະພາບຄ່ອງ ໄຟຟ້າລາວ ຈຳ ນວນ 39,155,618.94 ໂດລາ ສະຫະລັດ.

ມາໃນວັນທີ 1/12/2014 ພວກ ຈຳເລີຍ ໄດ້ເຊັນສັນຍາ EPC ກັບ ບໍລິສັດ ບໍລິນໂກ ມູນຄ່າ 198,827,000 ໂດລາ ສະຫະລັດ (ໜຶ່ງຮ້ອຍເກົ້າສິບແປດລ້ານ ແປດແສນຊາວເຈັດພັນ ໂດລາສະຫະລັດ), ແລ້ວເລີ່ມກໍ່ສ້າງໂຄງການດັ່ງກ່າວຮອດ ເດືອນ 05/2016 ສຳເລັດ 42,13% ຊຶ່ງຢູ່ໃນໄລຍະທີ່ທ້າວ ສີສະຫວາດ (ຈຳ ເລີຍ1) ເປັນຜູ້ອຳນວຍການໃຫຍ່ ຟຟລ ແລະ ທ້າວ ຄຳ (ຈຳເລີຍ2) ເປັນຫົວໜ້າ ການສຶກສາສຳຫຼວດ-ອອກແບບສາຍສົ່ງ ຂອງລັດວິສາຫະກິດໄຟຟ້າລາ.

ເມື່ອຄະນະສະເພາະກິດ ໄດ້ລົງເລິກ ວຽກງວດກາໂຄງການດັ່ງກ່າວ ເຫັນວ່າມີ ມູນຄ່າພຽງ 155,073,328.41 ໂດລາ ສະຫະລັດ ແຕ່ກໍ່ສ້າງຕົວຈິງໄດ້ພຽງແຕ່ 123,865,693.71 ໂດລາສະຫະລັດ, ຊຶ່ງໄດ້ສ້າງຜົນເສຍຫາຍໃຫ້ລັດ ຈຳນວນ 31,207,655 ໂດລາສະຫະລັດ ຕາມບົດ ສະຫຼຸບຜົນການກວດກາ ສະບັບລົງວັນທີ 05/04/2023.

ຕໍ່ກັບການກະທຳດັ່ງກ່າວຂອງພວກ ຈຳເລີຍ ໄດ້ທຳການປອມແປງ-ດັດແກ້ ເອກະສານ ແລະ ທັງເປັນການສວຍໃຊ້ ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ສະແດງອອກຄື: ຈຳເລີຍ1 ແລະ ຈຳເລີຍ2 ກໍຮູ້ດີວ່າ ໂຄງການກໍ່ສ້າງກໍ່ສ້າງສາຍສົ່ງ 230 ກິໂລວັດ ທ່າວຽງ-ຫຼັກ20 ແລະ 115 ກິໂລວັດ ນ້ຳໄຜ-ທົ່ງຄູນ 2 ນັ້ນ ຍັງບໍ່ ທັນໄດ້ສຶກສາຄວາມເປັນໄປໄດ້ຂອງ ໂຄງການ, ບໍ່ມີແບບກໍ່ສ້າງ, ບໍ່ມີບ່ອນອີງໃນ ການຄິດໄລ່ບໍລິມາດວຽກ ແລະ ຫົວໜ່ວຍ ລາຄາ ແຕ່ກໍຍັງປອມແປງເອກະສານແລ້ວ ນຳສະເໜີຕໍ່ພັກ-ລັດ, ແລ້ວຈຳເລີຍ1 ຍັງ ໄດ້ໃຫ້ຄອບຄົວຂອງຜູ້ກ່ຽວ ເຄື່ອນໄຫວ

ຕໍ່ໜ້າ 4

ສານຕັດສິນຈຳຄຸກຕະຫຼອດຊີວິດ ອະດີດຜູ້ອຳນວຍການໃຫຍ່ພະນັ... (ຕໍ່ຈາກໜ້າ 3)

ສ້າງສັນຍາກູ້ຢືມ ຂຶ້ນເພື່ອປົກປິດແຫຼ່ງທີ່ມາຂອງເງິນທີ່ຈຳເລີຍ1 ໄດ້ຈາກການສໍ້ລາດບັງຫລວງ ນຳບຸກຄົນ ແລະ ນິຕິບຸກຄົນ ແລະ ຍັງໄດ້ໃຫ້ທ້າວ ຈັນທະວົງ (ອະດີດເລຂາ ຈຳເລີຍ1 ) ໄປເປີດບໍລິສັດ ແລະ ບັນຊີທະນາຄານຕ່າງໆ ຈຳນວນ 9 ບັນຊີ ເພື່ອເຄື່ອນໄຫວຮັບເງິນຜົນປະໂຫຍດຈາກການສໍ້ລາດບັງຫຼວງ ອີງຕາມຄຳໃຫ້ການຮັບສາລະພາບ ແລະ ຊັດທອດຂອງທ້າວ ຈັນທະວົງ (ອະດີດເລຂາຈຳເລີຍ1), ສ່ວນທ້າວ ຄຳ (ຈຳເລີຍ2) ແມ່ນໄດ້ເຄື່ອນໄຫວແນະນຳ, ສະໜອງຂໍ້ມູນ ແລະ ໃຫ້ການຊ່ວຍເຫຼືອບຸກຄົນ ແລະ ນິຕິບຸກຄົນ ທີ່ຕິດພັນກັບອົງກຜູ້ກ່ຽວ ເພື່ອຮັບຜົນປະໂຫຍດພວກກ່ຽວ, ຈາກນັ້ນ ພວກຈຳເລີຍ ໄດ້ນຳເອົາຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນ ໄປຟອກເງິນ ດ້ວຍການຊື້ຊັບສິນຕ່າງໆເຊັ່ນ: ທີ່ດິນ, ພະຫານະ (ລົດ), ວັດຖຸທີ່ມີຄ່າ (ຄຳຮູບປະພັນ, ຄຳແທ່ງ, ພຣະຄຳ) ແລະ ຍັງນຳເງິນໄປສ້າງສິ່ງປຸກສ້າງ (ໂຮງແຮມ, ອາພັດເມັ້ນ, ເຮືອນ ແລະ ສວນ-ຣີສອດ) ແລະ ແລກປ່ຽນສະກຸນເງິນແລ້ວນຳໄປຝາກທະນາຄານກິນດອກເບ້ຍ, ຊື້ຮຸ້ນ, ພັນທະບັດ ແລະ ນຳໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດຂອງພວກກ່ຽວ ແລະ ຄອບຄົວ ເພື່ອປົກປິດ ແລະ ຊຸກເຊື່ອງ ແຫຼ່ງທີ່ມາຕົວຈິງຂອງຊັບ ແລະ ເງິນດັ່ງກ່າວ ເພື່ອເຮັດໃຫ້ເປັນຊັບສິນ ແລະ ເງິນດັ່ງກ່າວຖືກຕ້ອງຕາມກົດໝາຍ; ຊຶ່ງພວກຈຳເລີຍ ໄດ້ສ້າງຜົນເສຍຫາຍໃຫ້ລັດ ຈຳນວນ 31,207,655 ໂດລາສະຫະລັດ ຕາມບົດສະຫຼຸບຜົນການກວດກາ ສະບັບລົງວັນທີ 5 ເມສາ 2023; ດັ່ງນັ້ນ ສານຈຶ່ງໄດ້ຕັດສິນພວກຈຳເລີຍ ດັ່ງນີ້:

ລົງໂທດຕັດອິດສະລະພາບ ທ້າວ ສິສະຫວາດ ທິຣະວົງ (ຈຳເລີຍ1) ແລະ ທ້າວ ຄຳ ມົ່ງບຸບຜາ (ຈຳເລີຍ2) ຕະຫຼອດຊີວິດ ແລະ ປັບໃໝ ຈຳເລີຍ1 ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າ 29,433,655 ໂດລາສະຫາລັດ ແລະ ປັບໃຫມ ຈຳເລີຍ2 ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າ 1,774,000 ໂດລາສະຫາລັດ.

ໃຫ້ ທ້າວ ສິສະຫວາດ ທິຣາວົງ (ຈຳເລີຍ1) ໃຊ້ແທນຄ່າເສຍຫາຍທາງແພ່ງ ມູນຄ່າ 29,433,655 ໂດລາສະຫາລັດ ແລະ ໃຫ້ທ້າວ ຄຳ ມົ່ງບຸບຜາ (ຈຳເລີຍ2) ມູນຄ່າ 1,774,000 ໂດລາສະຫາລັດ ຄືນໃຫ້ແກ່ລັດ.

ຮິບ ຊັບສິນ ແລະ ວັດຖຸສິ່ງຂອງ ຂອງພວກຈຳເລີຍ ເຊັ່ນ: ເງິນໃນບັນຊີ, ຄຳ, ທີ່ດິນ, ອາຄານ-ສິ່ງປຸກສ້າງ (ໂຮງແຮມ, ສຸນກິລາ, ເຮືອນ) ແລະ ພາຫະນະ ຈຳນວນໜຶ່ງເຂົ້າເປັນຂອງລັດ.

ສິ່ງຊັບສິນ ແລະ ວັດຖຸສິ່ງຂອງ ຂອງ ພວກຈຳເລີຍ ແລະ ຄອບຄົວ ທີ່ບໍ່ກ່ຽວຂ້ອງກັບການກະທຳຜິດ ຈຳນວນໜຶ່ງ.

ໂດຍ: ບ່າວຄອນຂຽວ

ຂ່າວ: ຄວາມສະຫງົບ

◆ ข่าวพายใน · 11:24 ໂມງ · ອ່ານ 15 ຄັ້ງ

# ເຕືອນໄພ! ຍິງສາວຖືກລ້ວງກະເປົາກາງງານບຸນພະທາດຫຼວງ ເສຍຄຳຮູບປະພັນ ໜັກ 5 ບາດ!




ນະຄອນຫຼວງວຽງຈັນ ໃນຄືນວັນທີ 21 ພະຈິກ 2026 ທີ່ຜ່ານມາ: ເຈົ້າໜ້າທີ່ໄດ້ຮັບການແຈ້ງຄວາມຈາກຜູ້ເສຍຫາຍທີ່ມາຫ່ຽວງານບຸນນະມັດສະການພຣະທາດຫຼວງ ວຽງຈັນ ຕໍ່ກັບເຫດການ ຄຳຮູບປະພັນ ຈຳນວນ 5 ບາດ ໄດ້ສູນຫາຍໄປ; ເນື່ອງຈາກຖືກກຸ່ມຄົນບໍ່ດີສວຍໂອກາດໃນໄລຍະເວລາທີ່ມີຄົນແອອັດ ລົງມືລ້ວງກະເປົາລັກເອົາໄປ ແລະ ຍັງມີກໍລະນີໂທລະສັບມືຖືຕົກເຮຍເສຍຫາຍອີກ 1 ໜ່ວຍ.

ເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ດີ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ຂໍຮຽກຮ້ອງມາຍັງທຸກທ່ານ ຈົ່ງເພີ່ມທະວີຄວາມລະມັດລະວັງ ດັ່ງນີ້:

ຫຼີກເວັ້ນການນຳເອົາເງິນສົດ ຄຳ ຫຼື ເຄື່ອງປະດັບມີຄ່າ ຕິດຕົວໄປຍັງຈຸດທີ່ມີຄົນແອອັດ.

ຄວນສະພາຍກະເປົາໄວ້ທາງໜ້າ ແລະ ປິດໃຫ້ມິດຊິດຕະຫຼອດເວລາ.

ບໍ່ຄວນເກັບໂທລະສັບ ຫຼື ກະເປົາເງິນໄວ້ໃນຖົງໂສ້ງດ້ານຫຼັງ.

ເພີ່ມຄວາມລະມັດລະວັງ ແລະ ມີສະຕິຢູ່ສະເໝີ ໂດຍສະເພາະໃນຈຸດທີ່ມີປະຊາຊົນໜາແໜ້ນ.

ຫາກພົບເຫັນບຸກຄົນໜ້າສົງໄສ ຫຼື ພົບເຫດການລັກຊັບ ໃຫ້ຮີບແຈ້ງເຈົ້າໜ້າທີ່ຕຳຫຼວດທີ່ຢູ່ໃກ້ຄຽງທັນທີ ເພື່ອເຂົ້າສະກັດກັ້ນ ແລະ ແກ້ໄຂເຫດການໄດ້ຢ່າງທັນການ.

ທັງນີ້ ປກສ ນວ ຂໍຮຽກຮ້ອງໃຫ້ປະຊາຊົນທຸກຄົນ ຮ່ວມກັນເຝົ້າລະວັງ ແລະ ຊ່ວຍກັນແຈ້ງເບາะແສເມື່ອພົບເຫດຜິດປົກກະຕິ ພ້ອມຂໍຄວາມຮ່ວມມືຈາກທຸກຄົນ ຊ່ວຍກົດແບ່ງປັນ (Share) ຂ່າວສານນີ້ຕໍ່ໆກັນ ເພື່ອເຕືອນສະຕິ ແລະ ສ້າງຄວາມປອດໄພໃຫ້ແກ່ຕົນເອງ ຄອບຄົວ ແລະ ສັງຄົມ.

ຂ່າວ: ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ

**ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້**
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ຂ່າວພາຍໃນ · 13:02 ໂມງ · ອ່ານ 13 ຄັ້ງ

# ທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ຈະເດີນທາງໄປຢ້ຽມຢາມ ສສ ຫວຽດນາມ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດ ACMECS ຄັ້ງທີ 11 ແລະ ກອງປະຊຸມສຸດຍອດ CLMV ຄັ້ງທີ 12 ໃນວັນທີ 27-28 ພະຈິກ 2026



ໂດຍຕອບສະໜອງ ຕາມຄຳເຊື້ອເຊີນ ຂອງ ສະຫາຍ ເລ ມິງ ຮຶງ, ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະຫາຍ ສະເຫລີມໄຊ ກົມມະສິດ, ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມດ້ວຍ ພັນລະຍາ ຈະນຳພາຄະນະຜູ້ແທນຂັ້ນສູງ ຢ້ຽມຢາມ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຢ່າງເປັນທາງການ ເພື່ອເປັນການສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດລາວ-ຫວຽດນາມ ແລະ ຈະເຂົ້າຮ່ວມກອງປະຊຸມສຸດຍອດ ACMECS ຄັ້ງທີ 11 ແລະ ກອງປະຊຸມສຸດຍອດ CLMV ຄັ້ງທີ 12, ໃນລະຫວ່າງວັນທີ 27-28 ພະຈິກ 2026.

ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ຂ່າວ: ກະຊວງການຕ່າງປະເທດ

ໂຄສະນາ

## ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 10:27 ໂມງ · ອ່ານ 10 ຄັ້ງ

# ປິດກອງປະຊຸມໄອປາ ຄັ້ງທີ 47 ພ້ອມມອບລາງວັນກຽດຕິຄຸນໃຫ້ແກ່ອະດີດການນຳຂັ້ນສູງຂອງສະພາແຫ່ງຊາດລາວ




ໃນວັນທີ 20 ພະຈິກຜ່ານມາ, ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 47 (47th AIPA General Assembly) ໄດ້ປິດລົງຢ່າງເປັນທາງການ ທີ່ນະຄອນຫຼວງມະນີລາ, ສາທາລະນະລັດຟີລິບປິນ; ໂດຍມີທ່ານ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ແຫ່ງ ສປ ປລາວ ເຂົ້າຮ່ວມ.

ໃນພິທີປິດ, ໄດ້ມີການຮັບຮອງເອົາບົດລາຍງານຜົນຂອງກອງປະຊຸມກຳມາທິການ ແລະ ກອງປະຊຸມປຶ້ນອ້ອມຕ່າງໆ ຄື: ກຳມາທິການວຽກງານການເມືອງ, ເສດຖະກິດ, ສັງຄົມ, ກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ (WAIPA), ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ (YPA), ກຳມາທິການວຽກງານຈັດຕັ້ງພາຍໃນ, ກອງປະຊຸມປຶກສາຫາລືກັບປະເທດສັງເກດການ, ກອງປະຊຸມພົບປະລະຫວ່າງ ໄອປາ-ອາຊຽນ ຄັ້ງທີ 5 ລວມເຖິງບົດລາຍງານຂອງຄະນະກຳມະການຮ່າງຖະແຫຼງການຮ່ວມ ພ້ອມທັງໄດ້ຮ່ວມກັນລົງນາມໃນຖະແຫຼງການຮ່ວມຂອງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 47 ແລະ ພິທີມອບລາງວັນກຽດຕິຄຸນໄອປາ (AIPA Distinguished Service Award) ໃຫ້ແກ່ບັນດາຜູ້ທີ່ມີຜົນງານດີເດັ່ນ ຈຳນວນ 3 ທ່ານ ຄື: ທ່ານ ໄຊສົມພອນ ພົມວິຫານ ອະດີດປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ທ່ານ ນາງ ປວນ ມະຫາຣານີ (Puan Maharani) ປະທານສະພາຜູ້ແທນລາດສະດອນ ແຫ່ງ ສາທາລະນະລັດອິນໂດເນເຊຍ ແລະ ທ່ານ ຊົວ ຢາຣາ (Suos Yara) ສະມາຊິກສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ.

ພ້ອມກັນນີ້, ຍັງໄດ້ມອບ-ຮັບສະຖານະໃຫ້ແກ່ລັດຖະສະພາປະເທດສັງເກດການໃໝ່ຂອງໄອປາ ໄດ້ແກ່: ສາທາລະນະລັດແຊັກບີ (Serbia) ແລະ ຣາຊະອານາຈັກແອັດສະປາຍ (Spain) ໂດຍມີຜູ້ຕາງໜ້າຈາກທັງສອງປະເທດຂຶ້ນກ່າວຄຳປາໄສຮັບສະຖານະດັ່ງກ່າວ.

ໃນວາລະດຽວກັນ, ທ່ານ ເຟົາສຕິໂນ “ໂບຈິ” ຈີ. ດີ ທີ 3 (Faustino “Bojie” G. Dy III) ປະທານສະພາຜູ້ແທນລາດສະດອນ ແຫ່ງ ສາທາລະນະລັດຟີລິບປິນ ໃນນາມປະທານໄອປາ ຄັ້ງທີ 47 ໄດ້ລົງນາມ ແລະ ສົ່ງມອບໜັງສືມອບ-ຮັບຕຳແໜ່ງ, ຄ້ອນປະທານ ແລະ ທຸງຂອງໄອປາ ໃຫ້ແກ່ທ່ານປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດສິງກະໂປ ເພື່ອຮັບໜ້າທີ່ເປັນປະທານໄອປາ ຄັ້ງທີ 48 ໃນປີ 2027, ພ້ອມທັງຮັບຟັງຄຳກ່າວຮັບຕຳແໜ່ງ ແລະ ຮັບຊົມວິດີໂອແນະນຳປະເທດສິງກະໂປອີກດ້ວຍ.

ໃນຕອນທ້າຍຂອງພິທີປິດ, ທ່ານ ເຟົາສຕິໂນ “ໂບຈິ” ຈີ. ດີ ທີ 3 ໄດ້ກ່າວສູນທອນພິດປິດກອງປະຊຸມຢ່າງເປັນທາງການ ໂດຍໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການປະກອບສ່ວນຢ່າງຕັ້ງໜ້າຂອງບັນດາຄະນະຜູ້ແທນລັດຖະສະພາສະມາຊິກ, ປະເທດສັງເກດການ ແລະ ຄູ່ຮ່ວມມືຕ່າງໆ ທີ່ເຮັດໃຫ້ກອງປະຊຸມຄັ້ງນີ້ປະສົບຜົນສຳເລັດຢ່າງຈົບງາມ; ພ້ອມທັງຢໍ້າຄືນເຖິງຄວາມສຳຄັນຂອງການຮັດແໜ້ນຄວາມສາມັກຄີ ແລະ ການຮ່ວມມືລະຫວ່າງລັດຖະສະພາອາຊຽນ ເພື່ອສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນໃນພາກພື້ນ ກໍຄືການສືບຕໍ່ສະໜັບສະໜຸນສິງກະໂປ ໃນການເປັນເຈົ้าพาบจัดกอง ปะชุมถั้งต่ำไป.

ໂຄສະນາ

## ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 09:26 ໂມງ · ອ່ານ 10 ຄັ້ງ

# ບໍ່ລອດ! ເຈົ້າໜ້າທີ່ບຸກຈັບກຸ່ມຄົນໄທ ແລະ ມຽນມາ ລັກລອບເປີດການພະນັນອອນລາຍ ທັງໝົດ 13 ຄົນ ຍິງ 9 ຄົນ



ໜ່ວຍສະເພາະກິດ ກະຊວງ ປກສ ສືບທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ໄດ້ເຂົ້າກວດຄົ້ນ ແລະ ຈັບກຸມກຸ່ມຄົນຕ່າງປະເທດ ທີ່ລັກລອບເປີດພະນັນອອນລາຍ ຢູ່ບ້ານດຸງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໃນວັນທີ 20 ພະຈິກ 2026 ສາມາດກັກຕົວຜູ້ຖືກຫາໄດ້ທັງໝົດ 13 ຄົນ ຍິງ 9 ຄົນ ພ້ອມຂອງກາງອຸປະກອນການກະທຳຜິດຈຳນວນຫຼາຍ.

ຈາກການກວດກາຜູ້ຖືກຫາ ຈຳນວນ 13 ຄົນ ຍິງ 9 ຄົນ ພົບ 2 ສັນຊາດ ໃນນີ້, ສັນຊາດໄທ 10 ຄົນ ຍິງ 7 ຄົນ, ສັນຊາດມຽນມາ 3 ຄົນ ຍິງ 2 ຄົນ ພ້ອມຍຶດເຄື່ອງທີ່ໃຊ້ເຂົ້າໃນການກະທຳຜິດ ປະກອບມີ ຄອມພິວເຕີຕັ້ງໂຕະ ຈຳນວນ 27 ໜ່ວຍ ແລະ ໂທລະສັບມືຖື 341 ໜ່ວຍ.

ກຸ່ມຄົນດັ່ງກ່າວໃຊ້ຮູບແບບເຊົ່າເຮືອນທີ່ພາຍນອກຮົກເຮືອມິຫຍ້າຕົບໜາ ແລະ ກຳແພງເຮືອນສູງຄືບໍ່ມີຄົນອາໄສຢູ່ ເພື່ອອຳພາງຕາ ແລະ ຫຼົບຫຼີກການກວດກາຂອງເຈົ້າໜ້າທີ່ ແລ້ວລັກລອບຕັ້ງຖານປະຕິບັດການລັກລອບເປີດພະນັນອອນລາຍ.

ຂ່າວ: ຄວາມສະຫງົບ

ຂ່າວພາຍໃນ · 13:38 ໂມງ · ອ່ານ 8 ຄັ້ງ

# ສ້າງຂະບວນການສາມັກຄີ ແລະ ສົ່ງເສີມພອນສະຫວັນເຍົາວະຊົນ ງານພົບປະເຍົາວະຊົນທັນວາ ທົ່ວເມືອງນາຊາຍທອງ ປະຈຳປີ 2026



ງານພົບປະເຍົາວະຊົນທັນວາ ປະຈຳປີ 2026 ຈັດຂຶ້ນໃນວັນທີ 20 ພະຈິກຜ່ານມາ ທີ່ໂຮງຮຽນມັດທະຍົມສົມບູນ ຟ້າສີຄາມ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂດຍມີທ່ານ ພູວອນ ພິງລາດແລ້ວ ຮອງເລຂາພັກເມືອງ, ຫົວໜ້າຄະນະຈັດຕັ້ງເມືອງ, ຜູ້ຊີ້ນຳວຽກງານພັກ-ພະນັກງານ ແລະ ອົງການຈັດຕັ້ງມະຫາຊົນ, ບັນດາຫ້ອງການ, ຄະນະກຳມະການປົກຄອງຕາແສງ, ບ້ານ, ຄະນະຜູ້ອຳນວຍການໂຮງຮຽນ, ຄູ-ອາຈານ ແລະ ສະມາ ຊິກເຍົາວະຊົນທັນວາ ເຂົ້າຮ່ວມ.

ງານພົບປະເຍົາວະຊົນທັນວາ ທົ່ວເມືອງນາຊາຍທອງ ປະຈຳປີ 2026

ທ່ານ ຄູນໄຊ ມະນີວົງ ກຳມະການພັກເມືອງ, ເລຂາ ຄະນະບໍລິຫານງານຊາວໜຸ່ມ ປປລ ເມືອງນາຊາຍທອງ ກ່າວວ່າ: ການຈັດງານຄັ້ງນີ້, ເພື່ອສ້າງຂະບວນການຮໍ່ານັບຮັບຕ້ອນວັນຊາດທີ 2 ທັນວາ ຄົບຮອບ 51 ປີ, ວັນຄ້າຍວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 106 ປີ, ວັນສ້າງຕັ້ງເຍົາວະຊົນທັນວາ ຄົບຮອບ 71 ປີ ໃຫ້ເປັນຂະບວນການຟົດຟື້ນ ແລະ ມີຄວາມສາມັກຄີຢ່າງແໜ້ນແຟ້ນ.

ງານພົບປະເຍົາວະຊົນທັນວາ ທົ່ວເມືອງນາຊາຍທອງ ປະຈຳປີ 2026 ຈຸດປະສົງເພື່ອເປັນການປຸກຈິດສຳ

ຕໍ່ໜ້າ 8

ສ້າງຂະບວນການສາມັກຄີ ແລະ ສົ່ງເສີມພອນສະຫວັນເຍົາວະຊ... (ຕໍ່ຈາກໜ້າ 7)

ນຶກໃຫ້ສະມາຊິກເຍົາວະຊົນທັນອາ ໄດ້ຮັບຮູ້ໃນການເຄື່ອນໄຫວບັນດາ ກິດຈະກຳຕ່າງໆ ເຮັດໃຫ້ສະມາຊິກເຍົາວະຊົນ ໄດ້ມີໂອກາດພົບປະແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ ລະຫວ່າງ ສະມາຊິກເຍົາວະຊົນ ຢູ່ໂຮງຮຽນພາກລັດ ແລະ ເອກະຊົນ ໄດ້ຮູ້ຈັກຮັກແພງ ສ້າງຄວາມສາມັກຄີ, ຮູ້ຈັກຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ຮູ້ຈັກເກມກິລາການແຂ່ງຂັນ, ຮູ້ແພ້-ຮູ້ຊະນະ, ຮູ້ໃຫ້ອາໄພຊຶ່ງກັນ ແລະ ກັນ, ພ້ອມທັງເປັນການສ້າງໃຫ້ເຍົາວະຊົນ ໄດ້ມີໂອກາດໃນການກ້າສະແດງອອກທາງດ້ານຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນຂອງຕົນ ທັງເປັນການຍົກສູງບົດບາດຂອງອົງການຈັດຕັ້ງເຍົາວະຊົນທັນອາ ໃຫ້ມີຂະບວນການທີ່ຟົ້ນເດັ່ນ, ມີຄວາມເຂັ້ມແຂງຂຶ້ນ.

ງານພົບປະເຍົາວະຊົນທັນອາ ທົ່ວເມືອງນາຊາຍທອງ ປະຈຳປີ 2026

ງານພົບປະຄັ້ງນີ້, ປະກອບມີກິດຈະກຳສະແດງສິລະປະ-ວັນນະຄະດີ (ຟ້ອນລວມໝູ່, ຮ້ອງເພງ) ກິດຈະກຳແບບແຜນເຍົາວະຊົນ, ຕອບຄຳຖາມວິທະຍາສາດ, ກິດຈະກຳຮ່ວຍນ້ຳໃສ່ແກ້ວ ແລະ ອື່ນໆ.

ງານພົບປະເຍົາວະຊົນທັນອາ ທົ່ວເມືອງນາຊາຍທອງ ປະຈຳປີ 2026

ງານພົບປະເຍົາວະຊົນທັນອາ ທົ່ວເມືອງນາຊາຍທອງ ປະຈຳປີ 2026

ແຫຼ່ງຂ່າວ: ວຽງຈັນໃໝ່

◆ ຂ່າວພາຍໃນ · 09:32 ໂມງ · ອ່ານ 7 ຄັ້ງ

## ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ວາງກຳລັງຫຼາຍຮ້ອຍສະຫາຍ ລະບາຍການສັນຈອນ



ພະແນກຕຳຫຼວດຈະລາຈອນ ຫ້ອງຕຳຫຼວດ ປກສ ນະຄອນຫຼວງວຽງຈັນ ຈຶ່ງໄດ້ຈັດວາງກຳລັງເຈົ້າໜ້າທີ່ວິຊາສະເພາະ ຫຼາຍຮ້ອຍ ສະຫາຍ ລະບາຍການສັນຈອນໃຫ້ປະຊາຊົນ ມີ 135 ຈຸດ ທົ່ວນະຄອນຫຼວງວຽງຈັນ ລົງໃຫ້ບໍລິການ ອຳນວຍຄວາມສະດວກແກ່ຜູ້ທີ່ມີຈຸດປະສົງມາທ່ຽວບຸນ ແລະ ຜູ້ທີ່ນຳໃຊ້ລົດນຳໃຊ້ຖະໜົນ ເພື່ອສັນຈອນໄປ-ມາ ມີຄວາມສະດວກ ແລະ ຫຼຸດຜ່ອນການແອອັດ.

ພັທ ສັງຄົມ ພົມມະລາດ ຫົວໜ້າພະແນກຕຳຫຼວດຈະລາຈອນ ຫ້ອງຕຳຫຼວດ ປກສ ນະຄອນຫຼວງວຽງຈັນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ປກສ ວ່າ: ເພື່ອຮັບປະກັນໃຫ້ງານບຸນນະມັດສະການພຣະທາດຫຼວງວຽງຈັນ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ ໃຫ້ແກ່ການນຳພັກ-ລັດ ຕະຫຼອດຮອດປະຊາຊົນຊາວລາວ ແລະ ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໄດ້ມາທ່ຽວຊົມງານບຸນມີຄວາມສະຫງົບ ແລະ ເປັນລະບຽບ, ພະແນກຕຳຫຼວດຈະລາຈອນ ຈຶ່ງໄດ້ຈັດວາງກຳລັງເຂົ້າປະຈຳການປ້ອງກັນ ແລະ ລະບາຍການສັນຈອນ ທັງໝົດ 535 ສະຫາຍ, ແບ່ງອອກເປັນ 135 ຈຸດ ໃນຂອບເຂດທົ່ວນະຄອນຫຼວງວຽງຈັນ, ປະກອບມີ ຈຸດວົງໃນ ຈຳນວນ 78 ຈຸດ; ຈຸດວົງນອກ ຈຳນວນ 57 ຈຸດ; ຈຸດຄອຍເຫດ ແລະ ຈຸດກວດກາ 10 ຈຸດ ແລະ ຈຸດກວດກາປະຈຳການຕະຫຼອດ 24 ຊົ່ວໂມງ ຈຳນວນ 4 ຈຸດ ຄື: ເສັ້ນທາງເລກທີ 13 ໃຕ້, ເສັ້ນທາງເລກທີ 13 ເໜືອ, ເສັ້ນທາງເລກທີ 11 ຕອນເໜືອ ແລະ ເສັ້ນທາງເລກທີ 10 ທ່າງ່ອນ.

ນອກນີ້, ເຈົ້າໜ້າທີ່ວິຊາສະເພາະ ໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການປະຕິບັດໜ້າທີ່ ລະບາຍການສັນຈອນໃນໄລຍະບຸນນະມັດສະການພະທາດຫຼວງວຽງຈັນ ໃຫ້ມີຄວາມໂລ່ງລຽນ, ເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບປອດໄພ ແລະ ຮຽກຮ້ອງມາຍັງຜູ້ນຳໃຊ້ລົດນຳໃຊ້ຖະໜົນຢ່າງມີສະຕິ, ປະຕິບັດຕາມແຈ້ງການຂອງຫ້ອງວ່າການປົກຄອງ ນວ ແລະ ພະແນກ ຍທຂ ຢ່າງເຂັ້ມງວດ, ປະຕິບັດຕາມກົດຈະລາຈອນຢ່າງເຄັ່ງຄັດ, ເມື່ອດື່ມສິ່ງມຶນເມົາບໍ່ໃຫ້ຂັບທີ່ຢ່າງເດັດຂາດ, ຈອດລົດຕາມຈຸດທີ່ໄດ້ກຳນົດແລະຈັດສັນໄວ້ໃຫ້ຢ່າງເປັນລະບຽບຮຽບຮ້ອຍ, ຄ່ອຍໄປ-ຄ່ອຍມາ ບໍ່ໃຊ້ຄວາມໄວເກີນກຳນົດ, ກ່ອນຈະລ້ຽວລົດ ເຟື່ອປ່ຽນທິດທາງຕ້ອງສັງເກດຢ່າງຄັກແນ່ ໃຫ້ຕາສັນຍານກ່ອນສະເໝີ ເພື່ອຮັບປະກັນຄວາມປອດໄພທາງຊີວິດ ແລະ ຊັບສິນ.

ພາບ-ຂ່າວ: ສິດທິພັນ

ທີ່ມາ: ຄວາມສະຫງົບ Lao Security News

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 14:00 ໂມງ · ອ່ານ 8 ຄັ້ງ

## ກະສິກອນເມືອງລະຄອນເພັງ ແຂວງສາລະວັນ ເລັ່ງເກັບກ່ຽວເຂົ້ານາປີສຳເລັດແລ້ວ 95% ພ້ອມເດີນໜ້າປູກພືດລະດູແລ້ງໃນ 75 ບ້ານ!



ປັດຈຸບັນ ຊາວກະສິກອນ ເມືອງລະຄອນເພັງ ແຂວງ ສາລະວັນ ພວມຊຸ້ນຂ້ຽວສຸມໃສ່ເກັບມ້ຽນເຂົ້ານາປີ ສຳເລັດ ແລ້ວ 95% ໃນເນື້ອທີ່ທັງໝົດປະມານ 11,835 ເຮັກຕາ, ໄດ້ຜົນຜະລິດຫຼາຍກວ່າ 53,000 ໂຕນ ສະເລ່ຍ ສະມັດຕະພາບ 3.7 ໂຕນຕໍ່ເຮັກຕາ.

ໃນລະດູການປູກ 2025-2026 ທົ່ວເມືອງລະຄອນເພັງ ໄດ້ ວາງແຜນການປູກເຂົ້ານາປີ 15,460 ເຮັກຕາ ແລະ ສາມາດປັກດຳໄດ້ຕົວຈິງ 15,212 ເຮັກຕາ ເທົ່າກັບ 98.4% ຂອງແຜນການ; ໃນນັ້ນ, ນາດຳປະຕິບັດໄດ້ 8,712 ເຮັກຕາ (ເທົ່າກັບ 93.07%), ນາຢອດ 3,000 ເຮັກຕາ (ເທົ່າກັບ 103.4% ລື່ນແຜນ 3.4%) ແລະ ນາ ຫວ່ານ 3,500 ເຮັກຕາ (ລື່ນແຜນການ 9.3%). ນອກຈາກນີ້, ການເກັບກູ້ພືດລະດູຝົນຂອງເມືອງ ຍັງສຳເລັດ ແລ້ວ 315 ເຮັກຕາ ເທົ່າກັບ 100% ໄດ້ ຜົນຜະລິດທັງໝົດ 2,715 ໂຕນ.

ທິດທາງ ແລະ ແຜນການປູກພືດ ລະດູແລ້ງ

ທ່ານ ຄຳກອນ ວິໄລສັກ ຫົວໜ້າ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງລະຄອນເພັງ ໄດ້ໃຫ້ສຳພາດໃນວັນທີ 20 ພະຈິກ 2026 ນີ້ວ່າ: ພາຍຫຼັງທີ່ຊາວ ກະສິກອນສຳເລັດການເກັບມ້ຽນເຂົ້ານາປີ, ທາງຫ້ອງການຍັງໄດ້ເອົາໃຈໃສ່ສົ່ງເສີມການ ປູກພືດລະດູແລ້ງ ເພື່ອໃຫ້ການນຳໃຊ້ເນື້ອ ທີ່ດິນ ແລະ ແຫຼ່ງນ້ຳເກີດປະໂຫຍດສູງສຸດ. ໂດຍຕາມແຜນການຂອງຂະແໜງການ ຈະ ສຸມໃສ່ 75 ບ້ານ ໃນເນື້ອທີ່ລວມ 591 ເຮັກຕາ, ຄາດຄະເນຜົນຜະລິດ 3,428 ໂຕນ (ສະເລ່ຍ 5.8 ໂຕນຕໍ່ເຮັກຕາ) ພ້ອມທັງສືບຕໍ່ຊຸກຍູ້ປະຊາຊົນໃຫ້ຜະລິດ ຢ່າງຕໍ່ເນື່ອງ ເພື່ອຍົກສູງຜົນຜະລິດ, ສ້າງ ລາຍຮັບ ແລະ ປະກອບສ່ວນຮັບປະກັນ ຄວາມໝັ້ນຄົງດ້ານສະບຽງອາຫານຂອງ ທ້ອງຖິ່ນ.

ການຜະລິດກະສິກຳ ຖືເປັນ ຂະແໜງການພື້ນຖານທີ່ສຳຄັນຕໍ່ການຍົກ ລະດັບຊີວິດການເປັນຢູ່ຂອງປະຊາຊົນ. ສຳລັບເມືອງລະຄອນເພັງ ເຊິ່ງເປັນເມືອງ ເຂດທົ່ງພຽງທີ່ມີສະພາບພູມສັນຖານ ເໝາະສົມຕໍ່ການປູກຝັງ ແລະ ລ້ຽງສັດ, ປະຊາຊົນສ່ວນໃຫຍ່ຈຶ່ງໄດ້ຍຶດຖືອາຊີບ ກະສິກຳເປັນຫຼັກ ເພື່ອສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ ແລະ ພັດທະນາເສດຖະກິດ ຄອບຄົວໃຫ້ໝັ້ນຄົງ.

ຂ່າວ-ພາບ: ສ.ພະຈັນ
ທີ່ມາ:

---

◆ ເສດຖະກິດ-ສັງຄົມ · 13:27 ໂມງ · ອ່ານ 7 ຄັ້ງ

## ຄອບຄົວກະສິກອນຕົວຢ່າງ! ປູກໝາກແຕງ 2 ເຮັກຕາ ສ້າງລາຍຮັບ 50-60 ລ້ານກີບຕໍ່ເດືອນ!



ແຫຼ່ງຂ່າວຈາກແຂວງສະຫວັນນະເຂດ ລາຍງານວ່າ: ໃນວັນທີ 20 ພະຈິກ 2026 ຜ່ານມາ, ທ່ານ ພິງຄຳຮັກ ບຸດທະວົງ ເລຂາພັກນະຄອນ ແລະ ຫົວໜ້າຄະນະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດ ເລືອກຕັ້ງນະຄອນໄກສອນ ພົມວິຫານ ພ້ອມຄະນະ ໄດ້ລົງ ຕິດຕາມ ແລະ ຊຸກຍູ້ການປູກໝາກແຕງເປັນສິນຄ້າຂອງ ປະຊາຊົນ ຢູ່ບ້ານຊອກ, ຕາແສງດົງຄຳຫຼວງ, ນະຄອນ ໄກສອນ ພົມວິຫານ ໂດຍມີຄະນະປົກຄອງຕາແສງ, ອົງການປົກຄອງບ້ານຊອກ ແລະ ທ່ານ ປັນຍາ ເຈົ້າຂອງ ສວນໝາກແຕງ ໃຫ້ການຕ້ອນຮັບ.

ການລົງຕິດຕາມຄັ້ງນີ້ ມີຈຸດປະສົງເພື່ອຊຸກຍູ້ ແລະ ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ຕາມທິດເພິ່ງ ຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍ ຕົນເອງ ຕາມແນວທາງນະໂຍບາຍຂອງພັກ-ລັດ.

ສຳລັບສວນໝາກແຕງດັ່ງກ່າວ ຕັ້ງຢູ່ບ້ານຊອກ ມີ ເນື້ອທີ່ປູກທັງໝົດ 2 ເຮັກຕາ. ເຖິງວ່າພື້ນທີ່ຍັງບໍ່ມີລະບົບ ຄອງຊົນລະປະທານ ແລະ ຕ້ອງອາໄສນ້ຳ ຈາກບໍ່ບາດານເປັນຫຼັກ ແຕ່ເຈົ້າຂອງສວນ ຍັງຄົງສືບຕໍ່ປູກໝາກແຕງເປັນປະຈຳທຸກປີ ແລະ ປັດຈຸບັນກຳລັງຢູ່ໃນໄລຍະເກັບກ່ຽວ ໂດຍໄດ້ຜົນຜະລິດດີພໍສົມຄວນ.

ຜົນຜະລິດໝາກແຕງທີ່ເກັບກ່ຽວ ໄດ້ ສ່ວນໜຶ່ງຈຳໜ່າຍຢູ່ພາຍໃນນະຄອນ ໄກສອນ ພົມວິຫານ, ສົ່ງໄປຈຳໜ່າຍຢູ່ ເມືອງໃກ້ຄຽງ ແລະ ມີພໍ່ຄ້າ-ແມ່ຄ້າມາຮັບ ຊື້ເຖິງສວນ. ຈາກການຜະລິດດັ່ງກ່າວ ສາມາດສ້າງລາຍຮັບໃຫ້ຄອບຄົວປະມານ 50-60 ລ້ານກີບຕໍ່ເດືອນ.

ໃນໂອກາດນີ້ ທ່ານ ພິງຄຳຮັກ ບຸດ ທະວົງ ໄດ້ກ່າວຊົມເຊີຍຕໍ່ຄວາມດຸໝັ່ນ ແລະ ຫົວຄິດປະດິດສ້າງຂອງເຈົ້າຂອງສວນ ທີ່ສາມາດນຳພາຄອບຄົວຜະລິດກະສິກຳ ເປັນສິນຄ້າ ແລະ ສ້າງລາຍຮັບໄດ້ຢ່າງເປັນ ຮູບປະທຳ. ພ້ອມທັງໄດ້ຊຸກຍູ້ໃຫ້ຂະຫຍາຍ ການປູກພືດ ແລະ ການລ້ຽງສັດໃຫ້ຫຼາຍ ຂຶ້ນ ເພື່ອເພີ່ມລາຍຮັບໃຫ້ຄອບຄົວ ພ້ອມ ທັງຍົກລະດັບຊີວິດການເປັນຢູ່ຂອງ ປະຊາຊົນໃຫ້ດີຂຶ້ນຢ່າງຕໍ່ເນື່ອງ.

---

**ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້**
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

## ເຫດການ

ເຫດການ · 16:39 ໂມງ · ອ່ານ 10 ຄັ້ງ

# ບໍ່ລອດ! ໂຈນລັກເບຍໄຮເນເກັນ 3 ແກັດ ຢູ່ບ້ານໂຊກນ້ອຍ ເຈົ້າຂອງຮ້ານຂີ່ລົດໄລ່ຕາມ ພົນລະເມືອງດີຊ່ວຍຈັບໄວ້ໄດ້ທັນຄວັນ



ແມ່ນແລ້ວ... ອ່ານບໍ່ຜິດ! ເຫດເກີດໃນຄືນວັນທີ 20 ພະຈິກ 2026 ທີ່ຜ່ານມາ ເວລາປະມານ 22:00 ໂມງ, ໄດ້ມີຄົນຮ້າຍເລາะລັກເອົາ ເບຍໄຮເນເກັນ (Heineken) ຈຳນວນ 3 ແກັດ ຢູ່ຮ້ານຄ້າແຫ່ງໜຶ່ງ ໃນເຂດບ້ານໂຊກນ້ອຍ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.ແຕ່ສຸດທ້າຍບໍ່ລອດ ຖືກເຈົ້າຂອງຮ້ານ ແລະ ພົນລະເມືອງດີຊ່ວຍກັນໄລ່ຈັບຕົວໄວ້ໄດ້.

ອີງຕາມການລາຍງານເບື້ອງຕົ້ນໃຫ້ຮູ້ວ່າ ພາຍຫຼັງເກີດເຫດການລັກຊັບດັ່ງກ່າວ, ເຈົ້າຂອງຮ້ານທີ່ເປັນຜູ້ເສຍຫາຍໄດ້ຮີບຂັບຂີ່ລົດໄລ່ຕິດຕາມຄົນຮ້າຍໄປຢ່າງກະຊັ້ນຊິດ ໂດຍມີພົນລະເມືອງດີໃນພື້ນທີ່ເຂົ້າຊ່ວຍເຫຼືອສະກັດຈັບ ຈົນສາມາດຄວບຄຸມຕົວຜູ້ກໍ່ເຫດໄວ້ໄດ້ສຳເລັດ.

ປັດຈຸບັນ, ພົນລະເມືອງດີ ແລະ ຜູ້ເສຍຫາຍ ໄດ້ມອບຕົວຜູ້ຖືກຫາພ້ອມຂອງກາງໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດກ່ຽວຂ້ອງ ເພື່ອນຳຕົວໄປສືບສວນ-ສອບສວນ ແລະ ດຳເນີນຄະດີຕາມລະບຽບກົດໝາຍຕໍ່ໄປ.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ
ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ເຫດການ · 13:17 ໂມງ · ອ່ານ 7 ຄັ້ງ

# ເຈົ້າໜ້າທີ່ ປກສ ແຂວງຈຳປາສັກ ຈັບກຸມເປົ້າໝາຍຄ້າຂາຍຢາເສບຕິດ 2 ຄະດີ ຢຶດຢາເຄ 3 ກິໂລ ແລະ ຢາບ້າ 12,000 ເມັດ



ອີງຕາມການລາຍງານຂອງພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ປກສ ແຂວງຈຳປາສັກ ໃຫ້ຮູ້ວ່າ ໃນທ້າຍເດືອນຕຸລາ 2026 ທີ່ຜ່ານມາ, ເຈົ້າໜ້າທີ່ວິຊາສະເພາະສາມາດມ້າງຄະດີ ແລະ ຈັບກຸມກຸ່ມເປົ້າໝາຍເຄື່ອນໄຫວຄ້າຂາຍຢາເສບຕິດໄດ້ 2 ລາຍ ຢູ່ເຂດນະຄອນປາກເຊ ແຂວງຈຳປາສັກ ພ້ອມຂອງກາງຈຳນວນຫຼາຍ.

ຄະດີທີ 1: ຈັບກຸມຜູ້ຕ້ອງຫາສັນຊາດຫວຽດນາມ ພ້ອມຢາເຄ 3 ກິໂລ

ໃນວັນທີ 24 ຕຸລາ 2026 ເວລາ 10:00 ໂມງ, ພາຍຫຼັງໄດ້ຮັບແຈ້ງຂ່າວຈາກພົນລະເມືອງດີວ່າມີການເຄື່ອນໄຫວຄ້າຂາຍຢາເສບຕິດ ຢູ່ເຂດບ້ານສະໝາມໄຊ ນະຄອນປາກເຊ, ເຈົ້າໜ້າທີ່ວິຊາສະເພາະຈຶ່ງໄດ້ສືບຫົບກັບອຳນາດການປົກຄອງບ້ານ ແລະ ພາກສ່ວນກ່ຽວຂ້ອງ ລົງກວດກາສະຖານທີ່ດັ່ງກ່າວ ແລະ ສາມາດກັກຕົວຜູ້ຖືກຫາໄດ້ 1 ຄົນ ຊື່ ທ້າວ ດັງ ວັນຮຸຍ (ໄຫວ) ອາຍຸ 27 ປີ ສັນຊາດ ຫວຽດນາມ ອາຊີບຄ້າຂາຍ ພັກເຊົາຢູ່ບ້ານ ສາງນ້ຳມັນ ນະຄອນປາກເຊ. ຜ່ານການກວດຄົ້ນ ສາມາດຢຶດຂອງກາງ ແລະ ຊັບສິນຕິດຕົວ ປະກອບມີ: ຢາເຄ ຈຳນວນ 3 ກິໂລ, ເງິນສົດ 22,000,000 ກີບ, ໂທລະສັບມືຖື 1 ໜ່ວຍ ແລະ ລົດຈັກ 1 ຄັນ.

ຄະດີທີ 2: ຈັບກຸມ 2 ຜູ້ຕ້ອງຫາ ພ້ອມຢາບ້າ 12,000 ເມັດ

ຕໍ່ມາໃນວັນທີ 31 ຕຸລາ 2026, ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ປກສ ແຂວງຈຳປາສັກ ໄດ້ຮັບໂອນຄະດີຢາເສບຕິດຈາກເຈົ້າໜ້າທີ່ກອງພັນປ້ອງກັນເຄື່ອນທີ່ ປກສ ແຂວງຈຳປາສັກ ຈຳນວນ 1 ລາຍ ມີຜູ້ຖືກຫາ 2 ຄົນ (ຍິງ 1 ຄົນ) ຄື: ທ້າວ ໄຊຍະສັກ ລາຊາພົນ ອາຍຸ 28 ປີ ແລະ ນາງ ຊົມພູ ພົມມາລາ ອາຍຸ 23 ປີ ທັງສອງເປັນ ກຳມະກອນ ຢູ່ບ້ານຮ່ອງຄະຍອມ ນະຄອນ ປາກເຊ. ພ້ອມຂອງກາງປະເພດຢາບ້າ ຈຳນວນ 6 ມັດ (ເທົ່າກັບ 12,000 ເມັດ), ລົດຈັກຍີ່ຫໍ້ຮອນດາ MSX ສີບົວ-ດຳ ໝາຍເລກທະບຽນ ດມ 5147 ຈຳ ປາສັກ ແລະ ໂທລະສັບມືຖື 2 ໜ່ວຍ.

ປະຈຸບັນ, ທັງສອງຄະດີແມ່ນຢູ່ໃນ ຂັ້ນຕອນການດຳເນີນການສືບສວນ-ສອບ ສວນຂອງເຈົ້າໜ້າທີ່ວິຊາສະເພາະ ເພື່ອ ຂະຫຍາຍຜົນຊອກຫາຜູ້ຮ່ວມ ຂະບວນການຄ້າຂາຍຢາເສບຕິດມາລົງໂທດ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

ທີ່ມາ: ຫ້ອງຂ່າວກອງບັນຊາການ ປກສ ແຂວງຈຳປາສັກ

## ໄລຟ໌ສະໄຕລ໌

ໄລຟ໌ສະໄຕລ໌ · 09:59 ໂມງ · ອ່ານ 7 ຄັ້ງ

# ງົດງາມ ແລະ ປະທັບໃຈ! ງານສະແດງສິລະປະ ເຊື່ອມໂຍງວົງຄະນາຍາດ ສານສຳພັນມິດຕະພາບ ຫວຽດນາມ-ລາວ



ສະຖານເອກອັກຄະລັດຖະທູດຫວຽດນາມ ປະຈຳ ລາວ ສົມທົບກັບຄະນະກຳມະການແຫ່ງລັດ ກ່ຽວກັບຊາວ ຫວຽດນາມອາໄສຢູ່ຕ່າງປະເທດ, ກະຊວງການຕ່າງປະເທດ ພ້ອມດ້ວຍບັນດາອົງການ ແລະ ໜ່ວຍງານທີ່ກ່ຽວຂ້ອງ ຈັດງານສະແດງສິລະປະ ພາຍໃຕ້ຫົວຂໍ້ “ເຊື່ອມໂຍງວົງຄະ ນາຍາດ, ເຟີ່ມພູນຄູນສ້າງສາຍພົວພັນມິດຕະພາບ ຫວຽດນາມ - ລາວ” ໃນວັນທີ 21 ພະຈິກ 2026 ຢູ່ຫໍ ວັດທະນະທຳແຫ່ງຊາດ ໃນໂອກາດສະເຫລີມສະຫລອງ ວັນຊາດ ສປປ ລາວ ຄົບຮອບ 51 ປີ (02/12/1975-02/12/2026), ສະເຫລີມສະຫລອງ ວັນມະຫາສາມັກຄີທົ່ວປວງຊົນທັງຊາດ, ວັນວັດທະນະທຳ ຫວຽດນາມ ແລະ ສະເຫລີມສະຫລອງວັນສ້າງຕັ້ງສາຍ ພົວພັນການທູດ ຄົບຮອບ 65 ປີ ແລະ ວັນເຊັນ ສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຫວຽດນາມ - ລາວ ຄົບຮອບ 50 ປີ ໃນປີ 2027 ໂດຍມີທ່ານ ຫວຽນ ມິງ ເຕີມ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳລາວ, ມີຊາວ ຫວຽດນາມອາໄສຢູ່ລາວ, ຕາງໜ້າຈາກ ກະຊວງການຕ່າງປະເທດ ພ້ອມດ້ວຍ ບັນດາອົງການ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ການຈັດກິດຈະກຳຄັ້ງນີ້, ສະແດງ ໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງພັກ, ລັດ ແລະ ບັນດາອົງການຕ່າງໜ້າ ຫວຽດນາມ ຕໍ່ກັບການດຳລົງຊີວິດຂອງ ຊາວຫວຽດນາມທີ່ອາໄສຢູ່ລາວ. ພ້ອມກັນ ນັ້ນ, ຍັງເປັນການປະກອບສ່ວນສົ່ງ ເສີມ ແລະ ຂະຫຍາຍແນວທາງນະໂຍບາຍກ່ຽວກັບ ວຽກງານຊາວຫວຽດນາມອາໄສຢູ່ຕ່າງ ປະເທດ. ໃນງານຄັ້ງນີ້ ມີນັກສິລະປິນມື ອາຊີບທີ່ມາຈາກໂຮງລະຄອນຊາວໜຸ່ມ ຫວຽດນາມ ມາຮ່ວມສະແດງ ໂດຍໄດ້ນຳ ເອົາບັນດາລາຍການສະແດງຮ້ອງເພງ ແລະ ຟ້ອນທີ່ໂດດເດັ່ນມາສູ່ຜູ້ຊົມ ຊຶ່ງເປັນການ ຍ້ອງຍໍສັນລະເສີນບ້ານເກີດເມືອງນອນ, ປະເທດຊາດ, ຄົນຫວຽດນາມ, ມູນເຊື້ອ ວັດທະນະທຳຂອງຊາດ ແລະ ສາຍພົວພັນ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີ ພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນ ຍຸດທະສາດ ຫວຽດນາມ-ລາວ, ຫວຽດນາມ-ລາວ.

ສະຖານເອກອັກຄະລັດຖະທູດ ຫວຽດນາມ ປະຈຳ ລາວ ໄດ້ສືບຕໍ່ເສີມ ຂະຫຍາຍບົດບາດຫລັກແຫລ່ງໃນ ວຽກງານການເຕົ້າໂຮມ, ຄົ້ນຂວ້ າຍ ແລະ ເຊື່ອມໂຍງວົງຄະນາຍາດ; ສ້າງເງື່ອນໄຂໃຫ້ ພໍ່ແມ່ພີ່ນ້ອງຊາວຫວຽດນາມຕ່າງດ້າວໄດ້

ຕໍ່ໜ້າ 12

ງົດງາມ ແລະ ປະທັບໃຈ! ງານສະແດງສິລະປະ ເຊື່ອມໂຍງວົງຄ... (ຕໍ່ຈາກໜ້າ 11)

ພົບປະ, ແລກປ່ຽນ, ແບ່ງປັນຄວາມຮູ້ສຶກ, ເພີ່ມທະວີຄວາມຜູກພັນກັບບ້ານເກີດເມືອງນອນ, ປະເທດຊາດ ແລະ ກັບບັນດາອົງການຕ່າງໜ້າຫວຽດນາມ ປະຈຳລາວ ແລະ ການນຳເອົາລາຍການສະແດງສິລະປະຈາກພາຍໃນປະເທດມາຮັບໃຊ້ວົງຄະນາຍາດ ຍັງເປັນການປະກອບສ່ວນຕອບສະໜອງຄວາມຕ້ອງການດ້ານການຊົມໃຊ້ວັດທະນະທຳ, ຮັກສາພາສາຫວຽດນາມ, ເອກະລັກທາງວັດທະນະທຳ ແລະ ບຳລຸງສ້າງນ້ຳໃຈທີ່ອ່ອນໜ້າສູ່ກົກເຄົ້າເຫງົ້າກຳໃນວົງຄະນາຍາດຊາວຫວຽດນາມທີ່ອາໄສຢູ່ຕ່າງປະເທດ.

ໄລຟ໌ສະໄຕລ໌ · 15:30 ໂມງ · ອ່ານ 6 ຄັ້ງ

## “ອາເລັກ ຟົງ” ນັກຮ້ອງຮ່ອງກົງ ສ້າງສະຖິຕິໂລກລອຍນ້ຳຂ້າມຮ່ອງກົງ-ມາເກົ໊າ 35 ກມ. ກ່ອນໄປຂຶ້ນເວທີຄອນເສີດທັນທີ



ອາເລັກ ຟົງ ນັກຮ້ອງ ແລະ ນັກສະແດງຊາວຮ່ອງກົງ ອະດີດນັກລອຍນ້ຳທີມຊາດ ໄວ 46 ປີ ລອຍນ້ຳຂ້າມຈາກຮ່ອງກົງໄປມາເກົ໊າ ໄລຍະທາງ 35 ກມ. ໃຊ້ເວລາ 8 ຊົ່ວໂມງ 37 ນາທີ ສ້າງສະຖິຕິກິນເນສເວີລ໌ເຣັກຄອດ ກ່ອນຂຶ້ນສະແດງຄອນເສີດການກຸສົນ

ວັນທີ 23 ພະຈິກ 2569 ທ່ານ ອາເລັກ ຟົງ ນັກຮ້ອງ ແລະ ນັກສະແດງຊາວຮ່ອງກົງ ໄວ 46 ປີ ສ້າງສະຖິຕິໂລກຈາກການລອຍນ້ຳຂ້າມທະເລໄລຍະທາງ 35 ກິໂລແມັດ ຈາກຮ່ອງກົງໄປຍັງມາເກົ໊າ ໃຊ້ເວລາ 8 ຊົ່ວໂມງ 37 ນາທີ 24 ວິນາທີ ສ້າງສະຖິຕິລອຍນ້ຳຊາຍທີ່ໄວທີ່ສຸດໃນເສັ້ນທາງລະຫວ່າງສອງເມືອງ ຕາມການບັນທຶກຂອງກິນເນສ ເວີລ໌ ເຣັກຄອດ

ລາຍງານຂ່າວລະບຸວ່າ ທີ່ໜ້າອັດສະຈັນໃຈຄື ຫຼັງຂຶ້ນຈາກນ້ຳ ແລະ ຜ່ານການລອຍນ້ຳອັນໜັກໜ່ວງ ຟົງຍັງເດີນທາງໄປຂຶ້ນເວທີສະແດງໃນຄອນເສີດການກຸສົນທັນທີ ໂດຍຍອມຮັບວ່າຮ່າງກາຍສິ້ງສັນຍານເຕືອນຈາກຄວາມອິດເມື່ອຍ ແລະ ລະຫວ່າງລອຍນ້ຳຕ້ອງປະເຊີນກັບອຸນຫະພູມນ້ຳທີ່ໜາວເຢັນຈົນເກືອບໝົດແຮງ ແລະ ແທບປະຄອງຕົວຕໍ່ໄປບໍ່ໄຫວ

ຂະນະທີ່ການລອຍນ້ຳຄັ້ງນີ້ຈັດຂຶ້ນເພື່ອລະດົມທຶນຊ່ວຍເຫຼືອເດັກດ້ອຍໂອກາດ ລວມເຖິງເດັກທີ່ມີຄວາມຕ້ອງການພິເສດດ້ານການສຶກສາ ໃຫ້ສາມາດເຂົ້າເຖິງການຝຶກຝົນ ແລະ ກິດຈະກຳກິລາໄດ້ຫຼາຍຂຶ້ນ

ທັງນີ້ ຟົງເຄີຍເປັນນັກລອຍນ້ຳທີມຊາດ ແລະ ເຂົ້າຮ່ວມການແຂ່ງຂັນກິລາໂອລິມປິກ ກ່ອນຫັນມາເຮັດວຽກໃນວົງການບັນເທີງທັ້ງໃນຖານະນັກຮ້ອງ ແລະ ນັກສະແດງ

ທີ່ມາ: singtaousa

# ຂ່າວຕ່າງປະເທດ

ຂ່າວຕ່າງປະເທດ · 15:44 ໂມງ · ອ່ານ 11 ຄັ້ງ

## ຕະຫຼາດຮຸ້ນອາຊີຜັນຜວນ! ຫຼັງນັກລົງທຶນເລີ່ມກັງວົນວ່າ ຮຸ້ນກຸ່ມ AI ຫວັ່ນລາຄາ ຮຸ້ນອາດຕົກຕໍ່ເນື່ອງ



ວັນທີ 23 ພະຈິກ 2026 ຕະຫຼາດຮຸ້ນໃນຫຼາຍປະເທດອາຊີກຳລັງຜະເຊີນກັບຄວາມຜັນຜວນຢ່າງໜັກ ຫຼັງນັກລົງທຶນເລີ່ມກັງວົນວ່າ ລາຄາຮຸ້ນຂອງບັນດາບໍລິສັດທີ່ກ່ຽວຂ້ອງກັບປັນຍາປະດິດ (AI) ອາດສູງເກີນມູນຄ່າທີ່ແທ້ຈິງ ແລະ ສ່ຽງຕໍ່ການເກີດວິກິດລາຄາຮຸ້ນ.

ຄວາມກັງວົນຂອງນັກລົງທຶນໃນຄັ້ງນີ້ ກຳລັງກົດດັນລາຄາຮຸ້ນຂອງບໍລິສັດກຸ່ມເຕັກໂນໂລຊີ ແລະ ບໍລິສັດຜະລິດຊິບລາຍ

ຕໍ່ໜ້າ 13

ຕະຫຼາດຮຸ້ນອາຊີສັ່ນສອນ! ຫຼັ່ງນັກລົງທຶນເລີ່ມກັງວົນວ່າ ຮຸ້ນກຸ່... (ຕໍ່ຈາກໜ້າ 12)

ໃຫຍ່ ເຊິ່ງຊິບເຫຼົ່ານີ້ເປັນສ່ວນສຳຄັນໃນການພັດທະນາ AI. ໂດຍສະເພາະຕະຫຼາດຮຸ້ນໃນໄຕ້ຫວັນ ແລະ ເກົາຫຼີໃຕ້ ກຳລັງຖືກຈັບຕາເບິ່ງຢ່າງໃກ້ຊິດ ເພາະທັງສອງເປັນຖານການຜະລິດຊິບ ແລະ ອຸປະກອນສຳຄັນສຳລັບອຸດສາຫະກຳ AI ຂອງໂລກ.

Nvidia ແລະການອອກຈາກຕຳແໜ່ງຂອງ Jensen Huang

ອີກໜຶ່ງປັດໄຈທີ່ເພີ່ມຄວາມກັງວົນໃຫ້ຕະຫຼາດ ແມ່ນການອອກຈາກຕຳແໜ່ງ CEO ຂອງ Jensen Huang ຜູ້ຮ່ວມກໍ່ຕັ້ງ ແລະ ຜູ້ນຳຄົນສຳຄັນຂອງ Nvidia ບໍລິສັດຜະລິດຊິບ AI ລາຍໃຫຍ່ຂອງໂລກ.

ການອອກຈາກຕຳແໜ່ງຂອງລາວເກີດຂຶ້ນທ່າມກາງຄວາມວຸ້ນວາຍພາຍໃນບໍລິສັດ ແລະ ການກວດສອບປະເດັນທີ່ກ່ຽວຂ້ອງກັບຄວາມສ່ຽງດ້ານຄວາມໝັ້ນຄົງ. ປະເດັນນີ້ຍິ່ງເພີ່ມຄວາມບໍ່ແນ່ນອນໃຫ້ກັບອະນາຄົດຂອງ Nvidia ແລະ ອຸດສາຫະກຳ AI ໂດຍລວມ.

ລົງທຶນມະຫາສານ ແຕ່ຈະໄດ້ກຳໄລຄຸ້ມຄ່າຫຼືບໍ່?

ໃນໄລຍະຜ່ານມາ ບໍລິສັດເຕັກໂນໂລຊີຈຳນວນຫຼາຍໄດ້ໃຊ້ເງິນມະຫາສານໂດຍບາງສ່ວນເປັນເງິນກູ້ຢືມ ເພື່ອສ້າງສູນຂໍ້ມູນ (Data Center), ຊື້ຊິບປະມວນຜົນ ແລະ ພັດທະນາລະບົບ AI.

ແຕ່ຄຳຖາມສຳຄັນຄື ເງິນທີ່ລົງທຶນໄປຈຳນວນມະຫາສານນັ້ນ ຈະສາມາດສ້າງລາຍຮັບ ແລະ ກຳໄລໄດ້ຫຼາຍພໍທີ່ຈະຊຳລະໜີ້ ແລະ ຮອງຮັບລາຄາຮຸ້ນທີ່ສູງຢູ່ໃນປັດຈຸບັນຫຼືບໍ່.

ນອກຈາກນັ້ນ ຄວາມຂັດແຍ້ງດ້ານເຕັກໂນໂລຊີລະຫວ່າງສະຫະລັດກັບຈີນ ລວມເຖິງແນວໂນ້ມການເພີ່ມການກວດສອບການສ້າງສູນຂໍ້ມູນ AI ຫຼັງພັກເດໂມແຄຣັດຊະນະເລືອກຕັ້ງກາງສະໄໝຢ່າງຂາດລອຍໃນສະຫະລັດ ກໍເປັນອີກປັດໄຈທີ່ກົດດັນຕະຫຼາດ.

ຫຼາຍປະເທດເລີ່ມຫາມາດຕະການປະຄອງຕະຫຼາດ

ການຂາຍຮຸ້ນຢ່າງໜັກໄດ້ເຮັດໃຫ້ທາງການໃນຫຼາຍປະເທດຫັນມາໃຫ້ຄວາມສົນໃຈ ແລະ ກຽມມາດຕະການຮອງຮັບ.

ເກົາຫຼີໃຕ້: ລັດຖະມົນຕີການເງິນຢືນຢັນວ່າ ພ້ອມມີມາດຕະການຊ່ວຍປະຄອງຕະຫຼາດ ຫາກມີຄວາມຈຳເປັນ.

ໄຕ້ຫວັນ: ທາງການກຳກັບຕະຫຼາດການເງິນສັ່ງເພີ່ມຄວາມເຂັ້ມງວດຕໍ່ການຂາຍຮຸ້ນທີ່ຢືມມາຂາຍກ່ອນ.

ຈີນ: ຕະຫຼາດຫຸ້ນປະກາດມາດຕະການຊ່ວຍເຫຼືອ ລວມທັງການຜ່ອນຄາຍເງື່ອນໄຂການກູ້ຢືມເງິນເພື່ອຊື້ຮຸ້ນ.

ຈັບຕາຄ່າເງິນໂດລາ ແລະ ອັດຕາດອກເບ້ຍ Fed

ຂະນະດຽວກັນ ຄ່າເງິນໂດລາສະຫະລັດຍັງແຂງຄ່າຢູ່ໃກ້ລະດັບສູງສຸດໃນຮອບ 19 ເດືອນ ທ່າມກາງຄວາມຄາດຫວັງວ່າ ທະນາຄານກາງສະຫະລັດ (Fed) ອາດປັບຂຶ້ນອັດຕາດອກເບ້ຍອີກ 0.25 ເປີເຊັນໃນເດືອນໜ້າ.

ອີກປັດໄຈສຳຄັນທີ່ນັກລົງທຶນກຳລັງລໍຖ້າ ແມ່ນການປະກາດຕົວເລກ PCE ຫຼືດັດຊະນີລາຄາການໃຊ້ຈ່າຍສ່ວນບຸກຄົນຂອງສະຫະລັດ ໃນວັນພຸດ. ຕົວເລກນີ້ເປັນມາດຕະວັດສຳຄັນໃນການວັດແທກເງິນເຟີ້ ແລະ ອາດຊ່ວຍບອກທິດທາງວ່າ Fed ຈະດຳເນີນນະໂຍບາຍດອກເບ້ຍແນວໃດຕໍ່ໄປ.

ນອກນັ້ນ ຕະຫຼາດຍັງຈັບຕາຕົວເລກການຜະລິດ ແລະ ການບໍລິການຂອງຝຣັ່ງ, ເຢຍລະມັນ, ອັງກິດ ແລະ ເຂດເງິນເອີໂຣ ລວມທັງການກ່າວຄຳປາໄສຂອງປະທານທະນາຄານກາງສາຂານິວຢອກ.

ຂ່າວ: ຣອຍເຕີ

◆ ຂ່າວຕ່າງປະເທດ · 14:17 ໂມງ · ອ່ານ 10 ຄັ້ງ

# ລອດປາຕິຫານ! ເດັກຊາຍອາຍຸ 7 ປີ ຕິດຢູ່ກ້ອງຊາກອາຄານເປັນເວລາ 14 ຊົ່ວໂມງ ຈາກເຫດການຣັດເຊຍໂຈມຕີຢູເຄຣນ



ທີມກູ້ໄພຢູເຄຣນຊ່ວຍເດັກຊາຍອາຍຸ 7 ປີ ຂຶ້ນມາຈາກຊາກອາຄານທີ່ພັກອາໄສໃນເມືອງດີເນີໄດ້ຢ່າງປອດໄພ ຫຼັງຕິດຢູ່ກ້ອງຊາກອາຄານເປັນເວລາເຖິງ 14 ຊົ່ວໂມງ ຈາກເຫດໂຈມຕີທາງອາກາດຂອງຣັດເຊຍ

ເຈົ້າໜ້າທີ່ຢູເຄຣນເປີດເຜີຍວ່າ ທີມກູ້ໄພສາມາດຊ່ວຍເຫຼືອເດັກຊາຍອາຍຸ 7 ປີ ອອກຈາກຊາກອາຄານທີ່ພັກອາໄສໃນເມືອງດີເນີ ແຄ້ວ ເຄຍຟ ໄດ້ຢ່າງປາຕິຫານ ຫຼັງຈາກຕິດຢູ່ໃຕ້ຊາກອາຄານເປັນເວລາເຖິງ 14 ຊົ່ວໂມງ ຈາກເຫດໂຈມຕີທາງອາກາດຂອງຣັດເຊຍໃນຕອນເຊົ້າມືດ ວັນອາທິດທີ 22 ພະຈິກ ເຊິ່ງເຫດການດັ່ງກ່າວເຮັດໃຫ້ມີຜູ້ເສຍຊີວິດ 11 ຄົນ.

ທ່ານ ທິມຸ ທຄາເຊນໂກ ຜູ້ວ່າການແຄ້ວ ເຄຍຟ ເປີດເຜີຍວ່າ ນອກຈາກເດັກຊາຍແລ້ວ ເຈົ້າໜ້າທີ່ຍັງສາມາດຊ່ວຍເຫຼືອແມ່ຍິງອາຍຸ 79 ປີ ອອກຈາກຊາກອາຄານໄດ້ຢ່າງປອດໄພ. ສ່ວນເດັກຊາຍມີອາການຄົງທີ່ ແລະ ຖືກນຳສົ່ງໂຮງໝໍແລ້ວ ຂະນະທີ່ແມ່ຍິງສູງອາຍຸກຳລັງໄດ້ຮັບການຮັກສາເຊັ່ນກັນ.

ປະທານາທິບໍດີ ໂວໂລດີເມຍ ເຊເລນສກີ ຜູ້ນຳຢູເຄຣນ ແລະ ສຳນັກງານຕຳຫຼວດແຫ່ງຊາດຢູເຄຣນ ຕ່າງກໍຢືນຢັນການຊ່ວຍເຫຼືອເດັກຊາຍຄົນດັ່ງກ່າວ ພ້ອມທັງຂອບໃຈເຈົ້າໜ້າທີ່ ແລະ ທຸກຝ່າຍທີ່ຮ່ວມປະຕິບັດການຊ່ວຍຊີວິດ.

ຂະນະດຽວກັນ ທີມກູ້ໄພທີ່ປະກອບມີຕຳຫຼວດ, ເຈົ້າໜ້າທີ່ເກັບກູ້ວັດຖຸລະເບີດ, ໝ່ວຍສຸນັກຄົ້ນຫາ ແລະ ບຸກຄະລາກອນທາງການແພດ ຍັງຄົງເລັ່ງຄົ້ນຫາຜູ້ທີ່ອາດຈະຕິດຢູ່ໃຕ້ຊາກອາຄານ. ທ່ານເຊເລນສກີລະບຸວ່າ ມີເຈົ້າໜ້າທີ່ຫຼາຍກວ່າ 130 ຄົນ ເຂົ້າຮ່ວມປະຕິບັດການ ແລະ ຈະດຳເນີນການຕໍ່ໄປຈົນກວ່າຈະມີຂໍ້ມູນທີ່ຊັດເຈນກ່ຽວກັບທຸກຄົນທີ່ຢູ່ໃນພື້ນທີ່ເກີດເຫດ.

ທ່ານເຊເລນສກີໄດ້ກ່າວສະແດງຄວາມເສຍໃຈຕໍ່ຄອບຄົວຂອງຜູ້ເສຍຊີວິດ ພ້ອມລະບຸວ່າ ອາຄານທີ່ພັກອາໄສຖືກໂຈມຕີຈົນບາງສ່ວນພັງເສຍຫາຍຢ່າງໜັກ. ຂະນະທີ່ການກູ້ໄພເປັນໄປດ້ວຍຄວາມຫຍຸ້ງຍາກ ເນື່ອງຈາກຍັງມີສັນຍານເຕືອນໄພທາງອາກາດ ແລະ ມີຄວາມສ່ຽງຈາກການໂຈມຕີລະລອກໃໝ່ຢ່າງຕໍ່ເນື່ອງ.

ທ່ານ ອີວານ ຟີຣ໌ຟສກີ ລັດຖະມົນຕີວ່າການກະຊວງມະຫາດໄທຢູເຄຣນ ລະບຸວ່າ ການໂຈມຕີອາຄານດັ່ງກ່າວເກີດຂຶ້ນໃນເວລາປະມານ 05:00 ໂມງ ຕາມເວລາທ້ອງຖິ່ນ ເຊິ່ງເປັນຊ່ວງເວລາທີ່ຄອບຄົວສ່ວນໃຫຍ່ຍັງກຳລັງນອນຫຼັບຢູ່. ກ່ອນໜ້ານີ້ ມີລາຍງານວ່າມີຜູ້ບາດເຈັບ 6 ຄົນ ແລະ ຍັງມີຜູ້ສູນຫາຍອີກຫຼາຍຄົນ.

ນອກຈາກເມືອງດີເນີແລ້ວ ຣັດເຊຍຍັງໄດ້ໂຈມຕີເຮືອນພັກອາໄສໃນເມືອງບີລາແຊີຣກວາ ເຮັດໃຫ້ມີຜູ້ເສຍຊີວິດອີກ 1 ຄົນ ແລະ ເກີດໄຟໄໝ້ອາຄານຫຼັງດັ່ງກ່າວ.

ສ ວ ນ ເ ມ ຶ ອ ງ ວ ິ ຊ ເ ນ ເ ວ (

ຕໍ່ໜ້າ 14

ລອດປາຕິຫານ! ເດັກຊາຍອາຍຸ 7 ປີ ຕົດຢູ່ກ້ອງຊາກອາຄານເປ... (ຕໍ່ຈາກໜ້າ 13)

Vyshneve) ໃນແຄວ້ນເຄຍຟ ກໍຖືກໂຈມຕີເຊັ່ນກັນ ໂດຍໂດຣນ Shahed ຂອງຣັດເຊຍໄດ້ພຸ່ງເຂົ້າໃສ່ຮ້ານຊຸບເປີມາເກັດ NOVUS ສົ່ງຜົນໃຫ້ມີຜູ້ເສຍຊີວິດ 3 ຄົນ ແລະ ບາດເຈັບ 15 ຄົນ ໃນນັ້ນມີເດັກນ້ອຍ 3 ຄົນລວມຢູ່ນຳ ຕາມການເປີດເຜີຍຂອງທ່ານ ອີລຢາ ດີຄອຟ ນາຍົກເທດສະມົນຕີເມືອງວີຊເນເວ.

ທ່ານເຊເລນສກີຍັງລະບຸວ່າ ຈົນຮອດຕອນແລງວັນອາທິດ ຣັດເຊຍໄດ້ເປີດການໂຈມຕີພື້ນທີ່ຕ່າງໆ ໃນຢູເຄຣນຫຼາຍກວ່າ 70 ຄັ້ງ ກວມເອົາ 10 ແຄວ້ນ. ນອກຈາກນີ້ ທ່ານ ເຊີຮີ ໂຄເຣດສກີ ນາຍົກລັດຖະມົນຕີຢູເຄຣນ ຍັງເປີດເຜີຍວ່າ ຣັດເຊຍໄດ້ໂຈມຕີສະຖານີໄຟຟ້າຍ່ອຍແຫ່ງໜຶ່ງໃນແຄວ້ນດນີໂປຣເປຕຣອຟສກ໌ ອີກດ້ວຍ.

ທັງນີ້ ຣັດເຊຍໄດ້ເປີດປະຕິບັດການຮຸກຮານຢູເຄຣນຄັ້ງໃຫຍ່ໃນປີ 2022 ແລະ ສົງຄາມລະຫວ່າງສອງປະເທດຍັງຄົງດຳເນີນຕໍ່ເນື່ອງມາຈົນເຖິງປັດຈຸບັນ.

ທີ່ມາ: BBC

---

ຂ່າວຕ່າງປະເທດ · 14:56 ໂມງ · ອ່ານ 7 ຄັ້ງ

## ຈີນເລັ່ງແກ້ວິກິດສັງຄົມສູງອາຍຸ-ເດັກເກີດໃໝ່ທີ່ຫຼຸດລົງ ຕັ້ງເປົ້າປີ 2030 ຍົກລະດັບສູນດູແລຜູ້ສູງອາຍຸ ແລະ ຂະຫຍາຍບໍລິການດູແລເດັກ



ຈີນກຳລັງເລັ່ງປັບປຸງລະບົບສະຫວັດດີການສັງຄົມ ເພື່ອຮອງຮັບຈຳນວນຜູ້ສູງອາຍຸທີ່ເພີ່ມຂຶ້ນ ແລະ ອັດຕາການເກີດລຸກທີ່ຫຼຸດລົງ ໂດຍກຳນົດເປົ້າໝາຍພາຍໃນປີ 2030 ໃຫ້ມີການຂະຫຍາຍສູນດູແລຜູ້ສູງອາຍຸ ພ້ອມທັງເພີ່ມບໍລິການດູແລເດັກນ້ອຍໃຫ້ຄອບຄຸມຫຼາຍພື້ນທີ່ທົ່ວປະເທດ.

ຕາມລາຍງານຂອງສຳນັກຂ່າວຕ່າງປະເທດ ລະບຸວ່າ ລັດຖະບານຈີນໄດ້ວາງແຜນຍົກລະດັບລະບົບດູແລຜູ້ສູງອາຍຸ ໂດຍຕັ້ງເປົ້າໃຫ້ສັດສ່ວນຕຽງດູແລທີ່ມີບຸກຄະລາກອນທາງການແພດ ແລະ ການພະຍາບານຮອງຮັບ ເພີ່ມເປັນ 73% ຂອງຕຽງດູແລທັງໝົດພາຍໃນປີ 2030.

ນອກຈາກນີ້ ຍັງມີແຜນຂະຫຍາຍສູນດູແລຜູ້ສູງອາຍຸໃນລະດັບຊຸມຊົນ ໃຫ້ຄອບຄຸມປະມານ 70% ແລະ ປັບປຸງສູນດູແລຜູ້ສູງອາຍຸຂອງລັດທີ່ມີຢູ່ເກົ່າປະມານ 2,000 ແຫ່ງ ເພື່ອເພີ່ມຄວາມພ້ອມໃນການໃຫ້ບໍລິການ.

ສ່ວນດ້ານການດູແລເດັກນ້ອຍ ຈີນມີແຜນຂະຫຍາຍສູນບໍລິການດູແລເດັກໃຫ້ຄອບຄຸມທຸກເມືອງລະດັບແຂວງ ພ້ອມຕັ້ງເປົ້າເພີ່ມອັດຕາການເຂົ້າເຖິງບໍລິການດູແລເດັກອາຍຸຕ່ຳກວ່າ 3 ປີ ອີກ 6 ຈຸດສ່ວນຮ້ອຍ ທຽບກັບລະດັບໃນປີ 2025.

ການປັບປຸງດັ່ງກ່າວເກີດຂຶ້ນທ່າມກາງຄວາມທ້າທາຍດ້ານໂຄງສ້າງປະຊາກອນຂອງຈີນ ຫຼັງຈາກຈຳນວນປະຊາກອນຫຼຸດລົງຕໍ່ເນື່ອງ ຂະນະທີ່ຈຳນວນຜູ້ສູງອາຍຸເພີ່ມຂຶ້ນ ແລະ ຈຳນວນເດັກເກີດໃໝ່ຫຼຸດລົງ.

ສະຖານະການນີ້ກຳລັງສ້າງຄວາມກົດດັນຕໍ່ລະບົບສາທາລະນະສຸກ ລະບົບບຳນານ ແລະຕະຫຼາດແຮງງານ ເນື່ອງຈາກຈຳນວນຄົນໄວເຮັດວຽກມີແນວໂນ້ມຫຼຸດລົງ ຂະນະທີ່ຄວາມຕ້ອງການດ້ານການດູແລສຸຂະພາບ ແລະ ສະຫວັດດີການສຳລັບຜູ້ສູງອາຍຸເພີ່ມຂຶ້ນ.

ການຂະຫຍາຍບໍລິການດູແລເດັກກໍເປັນອີກມາດຕະການໜຶ່ງທີ່ມຸ່ງຫຼຸດພາລະຄ່າໃຊ້ຈ່າຍໃນການລ້ຽງດູລຸກ ແລະ ຊ່ວຍໃຫ້ຄອບຄົວສາມາດເຂົ້າເຖິງບໍລິການດູແລເດັກໄດ້ສະດວກຂຶ້ນ.

ທັງນີ້ ແຜນການຂອງຈີນມີເປົ້າໝາຍເພື່ອສ້າງລະບົບສະຫວັດດີການທີ່ຮອງຮັບປະຊາກອນທຸກຊ່ວງໄວ ທັງຜູ້ສູງອາຍຸ ແລະ ເດັກນ້ອຍ ໂດຍກຳນົດໃຫ້ປີ 2030 ເປັນເປົ້າໝາຍສຳຄັນໃນການຍົກລະດັບບໍລິການດູແລສັງຄົມຂອງປະເທດ.

ທີ່ມາ: channelnewsasia/Reuters

---

ຂ່າວຕ່າງປະເທດ · 14:46 ໂມງ · ອ່ານ 7 ຄັ້ງ

## ອິນເດຍສັ່ງກວດນ້ຳດື່ມທຸກແບຣນທ໋ອປະເທດ ຫຼັງພົບຕົວຢ່າງນ້ຳຍີ່ຫໍ້ດັງ ບໍ່ປອດໄພ




ອົງການຄວາມປອດໄພດ້ານອາຫານຂອງອິນເດຍ ກຽມກວດສອບນ້ຳດື່ມບັນຈຸຂວດທຸກແບຣນ ຫຼັງພົບຕົວຢ່າງນ້ຳຂອງ Bisleri ແບຣນນ້ຳດື່ມລາຍໃຫຍ່ ບໍ່ຜ່ານເກນຄວາມປອດໄພ ແລະ ກວດພົບສານທີ່ອາດເປັນອັນຕະລາຍຕໍ່ສຸຂະພາບ.

ອົງການກຳກັບດູແລຄວາມປອດໄພດ້ານອາຫານຂອງອິນເດຍ ກວດພົບຕົວຢ່າງນ້ຳດື່ມບັນຈຸຂວດຂອງບໍລິສັດ ບິສເລີຣີ ອິນເຕີເນຊັນແນລ (Bisleri International) ບໍ່ປອດໄພຕໍ່ການບໍລິໂພກ ເຊິ່ງສ້າງຄວາມເສຍຫາຍຕໍ່ຄວາມເຊື່ອໝັ້ນໃນແບຣນນ້ຳດື່ມລາຍໃຫຍ່ ແລະ ເປັນທີ່ຮູ້ຈັກຫຼາຍທີ່ສຸດຂອງປະເທດ ຂະນະທີ່ແຫຼ່ງຂ່າວຈາກລັດຖະບານເປີດເຜີຍວ່າ ທາງການກຽມກວດສອບຕົວຢ່າງນ້ຳດື່ມຈາກທຸກບໍລິສັດທົ່ວປະເທດ.

ແຫຼ່ງຂ່າວລະບຸວ່າ ສຳນັກງານຄວາມປອດໄພ ແລະ ມາດຕະຖານອາຫານແຫ່ງອິນເດຍ (FSSAI) ມີແຜນກວດສອບຕົວຢ່າງນ້ຳຂອງບໍສເລີຣີເພີ່ມເຕີມຈາກທົ່ວປະເທດ ລວມທັງຜະລິດຕະພັນຂອງບໍລິສັດອື່ນໆ ນຳ ຫຼັງພົບບັນຫາດ້ານຄວາມປອດໄພໃນຕົວຢ່າງນ້ຳດື່ມດັ່ງກ່າວ.

ບິສເລີຣີແຂ່ງຂັນໃນຕະຫຼາດນ້ຳດື່ມບັນຈຸຂວດຂອງອິນເດຍກັບແບຣນ ອາຄວາ ຟີນາ (Aquafina) ຂອງເປັບຊິໂຄ ແລະ ຄິນລີ (Kinley) ຂອງໂຄຄາ-ໂຄລາ ໂດຍຕະຫຼາດນ້ຳດື່ມບັນຈຸຂວດຂອງອິນເດຍມີມູນຄ່າປະມານ 3,600 ລ້ານໂດລາສະຫະລັດໃນປີ 2025 ຕາມຂໍ້ມູນຈາກ Persistence Market Research.

ຕໍ່ໜ້າ 15

ອິນເດຍສັ່ງກວດນຳ້ດື່ມທຸກແບຣນທົວປະເທດ ຫຼັງພົບຕົວຢ່າງ... (ຕໍ່ຈາກໜ້າ 14)

ບໍລິສັດບິສເລີຣີອອກຖະແຫຼງການວ່າ ຄວາມປອດໄພຂອງນ້ຳດື່ມເປັນສິ່ງສຳຄັນອັນດັບທຳອິດຂອງບໍລິສັດ ແລະ ມີມາດຕະການຄວບຄຸມຄຸນນະພາບຢ່າງເຂັ້ມງວດ ພ້ອມຢືນຢັນວ່າຈະໃຫ້ຄວາມຮ່ວມມືກັບອົງການກຳກັບດູແລ.

ບິສເລີຣີເປັນແບຣນນ້ຳດື່ມທີ່ເປີດຕົວໃນອິນເດຍເມື່ອປີ 1965 ແລະ ກາຍເປັນແບຣນທີ່ຜູ້ບໍລິໂພກຮູ້ຈັກຢ່າງແຜ່ຫຼາຍ ເນື່ອງຈາກບັນຫາຄຸນນະພາບນ້ຳໃນຫຼາຍພື້ນທີ່ ເຮັດໃຫ້ປະຊາຊົນ ແລະ ນັກທ່ອງທ່ຽວມັກເລືອກຊື້ນ້ຳດື່ມບັນຈຸຂວດເພື່ອບໍລິໂພກທັງຢູ່ເຮືອນ ແລະ ຮ້ານອາຫານ.

ແຫຼ່ງຂ່າວຈາກລັດຖະບານອິກຄົນໜຶ່ງເປີດເຜີຍວ່າ ນ້ຳດື່ມລ໊ອດທີ່ກ່ຽວຂ້ອງກັບຕົວຢ່າງທີ່ກວດພົບບັນຫາໄດ້ຖືກເອີ້ນຄືນແລ້ວ ແລະ ຜົນການກວດສອບຜະລິດຕະພັນໃນລ໊ອດຖັດມາພົບວ່າບໍ່ມີບັນຫາດ້ານຄຸນນະພາບນ້ຳ.

ສຳນັກງານ FSSAI ລະບຸຜ່ານໂພສເທິງສື່ສັງຄົມອອນລາຍເມື່ອວັນອາທິດທີ 22 ພະຈິກວ່າ ຕົວຢ່າງນ້ຳທີ່ເກັບຈາກສະຖານປະກອບການຂອງບິສເລີຣີບໍ່ຜ່ານເກນທີ່ກຳນົດກ່ຽວກັບສານໂບຣເມດ (Bromate) ເຊິ່ງເປັນສານເຄມີທີ່ອາດເກີດຂຶ້ນເປັນຜົນພອຍໄດ້ຈາກຂະບວນການຂ້າເຊື້ອບາງປະເພດ.

ຢ່າງໃດກໍຕາມ ຫຼັງບໍລິສັດບິສເລີຣີອຸທອນຜົນການກວດສອບ ອົງການກຳກັບດູແລຍັງຄົງຢືນຢັນວ່າຕົວຢ່າງດັ່ງກ່າວບໍ່ປອດໄພ ແຕ່ລະບຸຜົນກວດເພີ່ມເຕີມວ່າພົບສານໄຮໂດຣຄາບອນອະໂຣມາຕິກຫຼາຍວົງ ຫຼື PAHs (Polynuclear Aromatic Hydrocarbons) ແທນ.

ສານ PAHs ເປັນກຸ່ມສານທີ່ໜ້າກັງວົນຕໍ່ສຸຂະພາບຂອງປະຊາຊົນ ເນື່ອງຈາກມີຄຸນສົມບັດເປັນພິດ ສາມາດກໍ່ໃຫ້ເກີດການກາຍພັນ ແລະ ມີຄວາມສ່ຽງຕໍ່ການກໍ່ມະເຮັງ ຕາມຂໍ້ມູນຈາກງານວິໄຈທີ່ເຜີຍແຜ່ເມື່ອປີທີ່ແລ້ວໃນຖານຂໍ້ມູນ PubMed ຂອງຫໍສະໝຸດແພດສາດແຫ່ງຊາດສະຫະລັດ.

ສ່ວນສານໂບຣເມດ ຫາກໄດ້ຮັບໃນປະລິມານສູງ ອາດສົ່ງຜົນໃຫ້ເກີດບັນຫາກ່ຽວກັບໝາກໄຂ່ຫຼັງ ແລະ ການສູນເສຍການໄດ້ຍິນ ຕາມຂໍ້ມູນຈາກກະຊວງສາທາລະນະສຸກລັດນິວຢອກ ຢ່າງໃດກໍຕາມ ກໍລະນີທີ່ມີລາຍງານຜົນກະທົບດັ່ງກ່າວເປັນການໄດ້ຮັບສານໃນລະດັບສູງກວ່າມາດຕະຖານນ້ຳດື່ມຫຼາຍພັນເທົ່າ.

ບິສເລີຣີຊີ້ແຈງວ່າ ຕົວຢ່າງນ້ຳທີ່ເກັບຈາກໂຮງງານໃນລັດກົວເມື່ອປີທີ່ຜ່ານມາພົບສານໂບຣເມດ 12 ໄມໂຄຣກຣາມຕໍ່ລິດ ສູງກວ່າຄ່າມາດຕະຖານທີ່ກຳນົດໄວ້ 10 ໄມໂຄຣກຣາມຕໍ່ລິດ ແຕ່ຜົນການກວດສອບເພີ່ມເຕີມຈາກຫ້ອງປະຕິບັດການອິດສະຫຼະທີ່ບໍລິສັດຈັດໃຫ້ກວດສອບພົບວ່າສານດັ່ງກ່າວຢູ່ໃນລະດັບທີ່ເປັນໄປຕາມມາດຕະຖານ.

ທັງນີ້ ອົງການກຳກັບດູແລອາຫານຂອງອິນເດຍໄດ້ເພີ່ມຄວາມເຂັ້ມງວດໃນການກວດສອບ ແລະ ດຳເນີນການກັບແບຣນສິນຄ້າລາຍໃຫຍ່ໃນປີນີ້ ໂດຍກ່ອນໜ້ານີ້ເມື່ອເດືອນກັນຍາ ຍັງໄດ້ດຳເນີນການທາງກົດໝາຍກັບບໍລິສັດເນສເລ່ ຫຼັງພົບຕົວຢ່າງຜະລິດຕະພັນອາຫານສຳລັບເດັກບໍ່ເປັນໄປຕາມມາດຕະຖານເຊັ່ນກັນ.

ທີ່ມາ: channelnewsasia

---

◆ ຂ່າວຕ່າງປະເທດ · 11:24 ໂມງ · ອ່ານ 7 ຄັ້ງ

## ບຸກໂຮງງານເຖື່ອນຜະລິດຢາແກ້ໄອປອມລາຍໃຫຍ່ 4 ຈັງຫວັດຂອງໄທ ຍຶດຂອງກາງມູນຄ່າກວ່າ 200 ລ້ານບາດ!



ວັນທີ 21 ພະຈິກ 2026, ພົນຕຳຫຼວດໂທ ນັດຖະສັກ ເຊົາວະນາໄສ ຜູ້ບັນຊາການຕຳຫຼວດສອບສວນກາງ (ຜບຊ.ກ.) ໄດ້ສັ່ງການໃຫ້ ກອງບັງຄັບການປາບປາມການກະທຳຄວາມຜິດກ່ຽວກັບການຄຸ້ມຄອງຜູ້ບໍລິໂພກ (ບກ.ປຄບ.) ສົມທົບຮ່ວມກັບເຈົ້າໜ້າທີ່ ສຳນັກງານຄະນະກຳມະການອາຫານ ແລະ ຢາ (ອຢ.) ແລະ ສຳນັກງານສາທາລະນະສຸກຈັງຫວັດ (ສສຈ.) ເປີດປະຕິບັດການກວາດລ້າງໂຮງງານເຖື່ອນທີ່ລັກລອບຜະລິດ ແລະ ເກັບຮັກສາຢາແກ້ໄອປອມລາຍໃຫຍ່ ໃນພື້ນທີ່ 4 ຈັງຫວັດ ຄື: ຈັງຫວັດປະທຸມທານີ, ສະໝຸດສາຄອນ, ພັງງາ ແລະ ພູເກັດ.

ຜ່ານການລົງປະຕິບັດການ, ເຈົ້າໜ້າທີ່ສາມາດຈັບກຸມຜູ້ຕ້ອງຫາໄດ້ 2 ຄົນ ຄື ທ້າວ ສຸດທິວັດ ອາຍຸ 57 ປີ ແລະ ນາງ ດາຣິນ ອາຍຸ 46 ປີ ຕາມໝາຍຈັບຂອງສານອາຍາ ໃນຂໍ້ຫາ "ຮ່ວມກັນຂາຍຢາແຜນປັດຈຸບັນໂດຍບໍ່ໄດ້ຮັບອະນຸຍາດ ແລະ ຮ່ວມກັນຂາຍຢາປອມ". ພ້ອມທັງກວດຢຶດຂອງກາງປະກອບມີ: ຢາແກ້ໄອປອມ ຈຳນວນ 122,300 ແກ້ວ, ສະຫຼາກຢາແກ້ໄອປອມ 2,282,500 ດວງ ລວມເຖິງວັດຖຸດິບ, ຂວດເປົ່າ, ຝາ ແລະ ເຄື່ອງຈັກທີ່ໃຊ້ໃນການຜະລິດ ລວມມູນຄ່າທັງໝົດກວ່າ 200 ລ້ານບາດ.

ທີ່ມາຂອງການສືບສວນ ແລະ ກົນອຸບາຍການກະທຳຜິດ

ຄະດີດັ່ງກ່າວສືບເນື່ອງມາຈາກເຈົ້າໜ້າທີ່ໄດ້ຮັບແຈ້ງວ່າ ມີການນຳຢານ້ຳແກ້ແພ້ ແລະ ຢາແກ້ໄອຊະນິດນ້ຳເຊື່ອມບາງຊະນິດ ໄປໃຊ້ຜິດວັດຖຸປະສົງ ໂດຍນຳມາປະສົມກັບນ້ຳກະທ່ອມຕົ້ມເພື່ອຄວາມມຶນເມົາໃນກຸ່ມໄວລຸ້ນ ແລະ ເຍົາວະຊົນ ພ້ອມທັງມີການລັກລອບຜະລິດຢາປອມສົ່ງຂາຍໃຫ້ຮ້ານຂາຍຢາ.

ຈາກການສືບສວນພົບວ່າ ເຄືອຂ່າຍດັ່ງກ່າວມີການແບ່ງໜ້າທີ່ກັນເຮັດຢ່າງເປັນລະບົບ ໂດຍແຍກສະຖານທີ່ຜະລິດແກ້ວ, ຝາ, ສະຫຼາກ ລວມເຖິງສະຖານທີ່ເກັບຮັກສາ ແລະ ຈັດສົ່ງ ແລ້ວນຳມາປະກອບບັນຈຸໃນສາງເກັບມ້ຽນ ໂດຍຈະປ່ຽນສະຖານທີ່ຜະລິດໄປເລື້ອຍໆ ເພື່ອໃຫ້ຍາກຕໍ່ການກວດສອບ. ນອກຈາກນີ້, ຍັງມີການປອມແປງເອກະສານການຊື້-ຂາຍ ແລະ ການຈັດສົ່ງສິນຄ້າ ຄ້າຍຄືເປັນຕົວແທນຈຳໜ່າຍຂອງບໍລິສັດເຈົ້າຂອງຜະລິດຕະພັນ ເພື່ອຕົວະໃຫ້ຮ້ານຂາຍຢາຫຼົງເຊື່ອວ່າເປັນຢາແທ້.

ທັງນີ້, ຍັງພົບປະຫວັດວ່າ ເຄືອຂ່າຍຜູ້ກະທຳຄວາມຜິດດັ່ງກ່າວເຄີຍຖືກຈັບກຸມມາແລ້ວເມື່ອປີ 2021 (ພ.ສ. 2564) ແຕ່ຍັງກັບມາກະທຳຜິດຊ້ຳຊາກໂດຍບໍ່ຄຳນຶງເຖິງຄວາມປອດໄພຂອງຜູ້ບໍລິໂພກ. ເຈົ້າໜ້າທີ່ຈຶ່ງໄດ້ຄວບຄຸມຕົວຜູ້ຕ້ອງຫາ ພ້ອມຂອງກາງທັງໝົດ ສົ່ງໃຫ້ພະນັກງານສອບສວນ ກອງກຳກັບການ 4 ບກ.ປຄບ. ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

ໝວດໝູ່: ຂ່າວຕ່າງປະເທດ / ອາຊະຍາກຳ

ທີ່ມາ: matichon

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 10:54 ໂມງ · ອ່ານ 7 ຄັ້ງ

# ໄຟໄໝ້ໂຮງງານຜະລິດເຂົ້າໜົມ ແລະ ນ້ຳຕານ ທີ່ປະເທດອິນໂດເນເຊຍ ເສຍຊີວິດແລ້ວ 3 ຄົນ ສູນຫາຍ 36 ຄົນ ເຈົ້າໜ້າທີ່ເລ່ງຄົ້ນຫາ



ໃນວັນທີ 21 ພະຈິກ 2026 ເວລາປະມານ 17:00 ໂມງ (ເວລາທ້ອງຖິ່ນອິນໂດເນເຊຍ) ເຫດໄຟໄໝ້ດັ່ງກ່າວເກີດຂຶ້ນທີ່ໂຮງງານຜະລິດເຂົ້າໜົມ ແລະ ຜະລິດຕະພັນນ້ຳຕານ ໃນເມືອງເຊຣັງ (Serang) ທາງຕາເວັນຕົກຂອງກຸງຈາກາຕາ ປະເທດອິນໂດເນເຊຍ ສິ່ງຜົນໃຫ້ມີຜູ້ເສຍຊີວິດ 3 ຄົນ ແລະ ສູນຫາຍອີກ 36 ຄົນ ຂະນະທີ່ໄຟຍັງຄົງລຸກໄໝ້ຢູ່ບາງຈຸດຂອງໂຮງງານ ເຮັດໃຫ້ການຄົ້ນຫາຜູ້ສູນຫາຍເປັນໄປດ້ວຍຄວາມຫຍຸ້ງຍາກ.

ທ່ານ ຣິສກີ ດວິອັນໂຕ (Rizki Dwianto) ເຈົ້າໜ້າທີ່ໜ່ວຍງານຄົ້ນຫາ ແລະ ກູ້ໄພທ້ອງຖິ່ນ ເປີດເຜີຍວ່າ ມີຜູ້ໄດ້ຮັບບາດເຈັບ 4 ຄົນ ແລະ ຖືກນຳສົ່ງໄປໂຮງໝໍ ແລະ ຄລີນິກໃກ້ຄຽງ ຫຼັງເກີດເຫດໄຟໄໝ້ໃນວັນເສົາຜ່ານມາ.

ໂຮງງານຟອນຊາ ອາກຸງ ມູເລຍ (Fonusa Agung Mulia) ຕັ້ງຢູ່ເຂດເຊຣັງ ຫ່າງຈາກກຸງຈາກາຕາປະມານ 50 ກິໂລແມັດ ໂດຍເຫດໄຟໄໝ້ເກີດຂຶ້ນໃນຊ່ວງບ່າຍວັນເສົາຜ່ານມາ ຕາມລາຍງານຂອງໜ່ວຍງານຄົ້ນຫາ ແລະ ກູ້ໄພທ້ອງຖິ່ນ.ພາບຂ່າວທາງໂທລະພາບທີ່ບັນທຶກໄວ້ໃນຊ່ວງກາງຄືນ ເຜີຍໃຫ້ເຫັນແປວໄຟກຳລັງລຸກໄໝ້ຕາມຈຸດຕ່າງໆຂອງໂຮງງານ ພ້ອມທັງມີບາງສ່ວນຂອງຫຼັງຄາອາຄານພັງຖະຫຼົ່ມລົງມາແລ້ວ.

ເຈົ້າໜ້າທີ່ລະບຸວ່າ ໃນວັນອາທິດຍັງມີໄຟລຸກໄໝ້ຢູ່ບາງຈຸດຂອງໂຮງງານ ເຮັດໃຫ້ການຄົ້ນຫາຜູ້ສູນຫາຍທັງ 36 ຄົນເປັນໄປຢ່າງຫຍຸ້ງຍາກ. ຂະນະທີ່ທີມງານຄົ້ນຫາ ແລະ ກູ້ໄພຈາກຫຼາຍໜ່ວຍງານ ກຳລັງເລ່ງປະຕິບັດການຢ່າງເຕັມກຳລັງ ໂດຍໃຫ້ຄວາມສຳຄັນຕໍ່ຄວາມປອດໄພຂອງເຈົ້າໜ້າທີ່ທີ່ປະຕິບັດງານຢູ່ໃນພື້ນທີ່.

ສ່ວນໜ່ວຍງານຈັດການໄພພິບັດທ້ອງຖິ່ນເລ່ງກວດສອບສາເຫດຂອງເຫດໄຟໄໝ້ຄັ້ງນີ້ ຍັງຢູ່ໃນລະຫວ່າງການສືບສວນ.

ທີ່ ມ າ ຂ່ າ ວ : channelnewsasia

ຂ່າວຕ່າງປະເທດ · 20:19 ໂມງ · ອ່ານ 4 ຄັ້ງ

## ສສ ຫວຽດນາມ-ອິນໂດເນເຊຍ ເພີ່ມທະວີ ການຮ່ວມມື ຫລາຍດ້ານ



ວິທະຍຸ ກະຈ່າຍສຽງຫວຽດນາມ, ສຳນັກງານລັດຖະບານ(ຮ່າໂນ້ຍ), ທ່ານຟ້າມຢາຕຸກ ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານຫວຽດນາມ ໄດ້ໃຫ້ການຕ້ອນຮັບ ທ່ານ ອາມານາທາ ຄຣິສຕຽນວັນ ນາຊີຣ( Arrmanatha Christiawan Nasir)ລັດຖະມົນຕີກະຊວງການຕ່າງປະເທດ ສ.ອິນໂດເນເຊຍເນື່ອງໃນໂອກາດ ທີ່ມາຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ ແຕ່ວັນທີ 20 – 22 ພະຈິກ. ທ່ານ ຟ້າມຢາຕຸກໄດ້ກ່າວເນັ້ນໜັກວ່າ: ການຮ່ວມມື ເສດຖະກິດ ແມ່ນຈຸດພື້ນເດັ່ນໃນການພົວພັນ ສອງປະເທດ.ວົງເງິນການຄ້າ ສອງຝ່າຍ ມຸ່ງໄປເຖິງເປົ້າໝາຍ 18 ຕື້ກວ່າໂດລາສະຫະລັດກ່ອນປີ 2028, ການລົງທຶນຂອງ ອິນໂດເນເຊຍ ເຂົ້າ ສສ ຫວຽດນາມ ເພີ່ມຂຶ້ນແຮງ ໃນປີ 2026 ໃນຂະນະ ບັນດາວິສາຫະກິດ ຫວຽດນາມ ສືບຕໍ່ເປີດກວ້າງ ການລົງທຶນ, ດຳເນີນທຸລະກິດ ຢູ່ ອິນໂດເນເຊຍ. ການຮ່ວມມື ໃນບັນດາຂົງເຂດ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການທ່ອງທ່ຽວ, ການບິນ, ວັດທະນະທຳ ສືບຕໍ່ໄດ້ປັບປຸງ ແລະເສີມຂະຫຍາຍ ຢ່າງມີປະສິດທິຜົນ. ທ່ານຟ້າມຢາຕຸກ ສະເໜີສອງຝ່າຍເພີ່ມທະວີ ການຊຸກຍູ້ບັນດາໂຄງການຮ່ວມມື ໃນບັນດາຂົງເຂດໃໝ່ ມີທ່າແຮງປັ່ມຊ້ອນຄືອຸດສາຫະກຳ Halal, ຄົ້ນຄ້ວາ ວິທະຍາສາດ ເຕັກໂນໂລຢີ, ນະວັດຕະກຳ, ເສດຖະກິດດີຈີຕອນ, ເສດຖະກິດ ສີຂຽວ, ຮັບປະກັນ ຄວາມໝັ້ນຄົງ ດ້ານສະບຽງອາຫານ ແລະ ດ້ານພະລັງງານ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ຂ່າວຕ່າງປະເທດ · 22:30 ໂມງ · ອ່ານ 2 ຄັ້ງ

## ການາດາ ເຂົ້າຮ່ວມກອງທຶນການປະດິດສ້າງໃໝ່ນາໂຕ ຢ່າງເປັນທາງການ




ວິທະຍຸ ໂທລະພາບສູນກາງຈີນ, ທ່ານດາວິດ ໄມກວິນຕີ ລັດຖະມົນຕີກະຊວງປ້ອງກັນປະເທດ ການາດາ ໄດ້ຖະແຫລງ ເມື່ອບໍ່ດົນມານີ້ວ່າ: ການາດາ ໄດ້ເຂົ້າຮ່ວມກອງທຶນ ການປະດິດ ສ້າງໃໝ່ ນາໂຕ ຢ່າງເປັນທາງການແລະ ກາຍເປັນປະເທດສະມາຊິກທີ 25 ຂອງນາໂຕ ທີ່ເຂົ້າຮ່ວມ ກອງທຶນດັ່ງກ່າວ, ທັງເປັນປະເທດ ສະມາຊິກ ທຳອິດຂອງ ນາໂຕ ທີ່ເຂົ້າຮ່ວມກອງທຶນດັ່ງກ່າວ ຢູ່ເຂດ ອາເມລິກາ ເໜືອ. ສຳລັບ ກອງທຶນ ການປະດິດສ້າງໃໝ່ ນາໂຕ ໄດ້ ສ້າງຕັ້ງຂຶ້ນໃນປີ 2022 ໂດຍມີຈຸດປະສົງ ເພື່ອເສີມສ້າງ ວຽກງານປ້ອງກັນປະເທດ, ຄວາມໝັ້ນຄົງ ແລະຄວາມ ແໜ້ນໝຽວ ຂອງນາໂຕ ຜ່ານການລົງທຶນ ພັດທະນາ ເຕັກ ໂນໂລຊີ ລ້ຳຍຸກ. ການາດາ ຈະສົມທົບທຶນ ຫລາຍກວ່າ 100 ລ້ານໂດລາການາດາ ຫລືປະມານ 70 ລ້ານໂດລາ ສະຫະລັດ ເຮັດໃຫ້ກອງທຶນດັ່ງກ່າວ ສາມາດລົງທຶນຕໍ່ ວິສາ ຫະກິດສະຕາອັບ ຫລື Start-upsແລະ ກອງທຶນຂອງ ການາດາໄດ້. ການເຂົ້າຮ່ວມ ກອງທຶນການປະດິດສ້າງໃໝ່ ນາໂຕຈະເປັນການທະລຸ ຊ່ອງທາງໃຫ້ແກ່ ວິສາຫະກິດປະດິດສ້າງໃໝ່ ຂອງ ການາດາ ແລະສາມາດເຂົ້າເຖິງທຶນ ໃນຂະໜາດ ຫລາຍກວ່າ 1 ຕື້ເອີໂຣ, ພ້ອມນີ້ ຈະສ້າງ ຊ່ອງທາງໃໝ່ ເພື່ອລົງເລິກການລົງທຶນ ດ້ານການປ້ອງກັນປະເທດ ລະຫວ່າງ ການາດາ ກັບພັນທະມິດ ນາໂຕຢູ່ເອີຣົບ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

**ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້**
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ໂຄສະນາ

## ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

## ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper


โถสะมา
EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ພາບລວມມື້ນີ້
25 ຕ.ລ. 2026
+ ເພີ່ມເມນູ
ຍອດຂາຍມື້ນີ້
₭ 4.250.000
12% ຈາກມື້ວານ
ອໍເດີ
86
ລູກຄ້າໃໝ່
12
ຍອດຂາຍ 7 ມື້
ຢາກມີລະບົບ ເປັນຂອງ ຕົວເອງບໍ? ເຮົາສ້າງໃຫ້
ສິ່ງທີ່ພວກເຮົາສ້າງໃຫ້ທ່ານ
ເວັບໄຊທ์ທຸລະກິດ
ເວັບແອັບ
ແອັບມືຖື
ຮ້ານຄ້າອອນລາຍ
ລະບົບ CRM
ລະບົບ ERP
ປລັກອິນ & API
ໂຊລູຊັນ AI
ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ
020 58886182
← ສະແກນ QR ເພື່ອແຊັດ WhatsApp · eds.la

# ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ



**ສະໜັບສະໜຸນໂດຍ [ແບຣນຂອງທ່ານ]** · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

## ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 12/11/2026

| ແຂວງ | ແອັດຊັ່ງ 95 | ທຳມະດາ 91 | ກາຊວນ |
|---|---|---|---|
| **ນະຄອນຫຼວງວຽງຈັນ** | **▼ 37,360** | **▼ 32,330** | **▼ 32,400** |
| ແຂວງວຽງຈັນ | ▼ 37,360 | ▼ 32,330 | ▼ 32,400 |
| ຜົ້ງສາລີ | ▼ 38,350 | ▼ 33,320 | ▼ 33,390 |
| ຫຼວງນ້ຳທາ | ▼ 37,850 | ▼ 32,830 | ▼ 32,890 |
| ອຸດົມໄຊ | ▼ 38,030 | ▼ 33,000 | ▼ 33,070 |
| ບໍ່ແກ້ວ | ▼ 37,460 | ▼ 32,430 | ▼ 32,500 |
| ຫຼວງພະບາງ | ▼ 37,870 | ▼ 32,840 | ▼ 32,910 |
| ຫົວພັນ | ▼ 37,870 | ▼ 32,840 | ▼ 32,910 |
| ໄຊຍະບຸລີ | ▼ 37,680 | ▼ 32,660 | ▼ 32,730 |
| ຊຽງຂວາງ | ▼ 37,560 | ▼ 32,520 | ▼ 32,590 |
| ໄຊສົມບຸນ | ▼ 37,780 | ▼ 32,750 | ▼ 32,830 |
| ບໍລິຄຳໄຊ | ▼ 37,410 | ▼ 32,380 | ▼ 32,450 |
| ຄຳມ່ວນ | ▼ 37,390 | ▼ 32,360 | ▼ 32,430 |
| ສະຫວັນນະເຂດ | ▼ 37,390 | ▼ 32,360 | ▼ 32,430 |
| ສາລະວັນ | ▼ 37,640 | ▼ 32,620 | ▼ 32,690 |
| ເຊກອງ | ▼ 37,640 | ▼ 32,610 | ▼ 32,690 |
| ຈຳປາສັກ | ▼ 37,420 | ▼ 32,390 | ▼ 32,460 |
| ອັດຕະປື | ▼ 37,690 | ▼ 32,660 | ▼ 32,730 |

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (22/10)

## ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

| | | |
|---|---|---|
| 24/11 | | ວັນພຣະ · ບຸນນະມັດສະການ ພຣະທາດຫຼວງວຽງຈັນ |
| 02/12 | | ວັນສະຖາປະນາ ສປປ ລາວ · ວັນພຣະ |
| 09/12 | | ວັນພຣະ |
| 10/12 | | ເດືອນຈຽງ |

ໂຄສະນາ

**ລົງໂຄສະນາ ໃນ ມະຫາສານ ລາຍວັນ**

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

## ອັດຕາແລກປ່ຽນ

ກີບ · BCEL 23/11/2026

| ສະກຸນເງິນ | ຊື້ (ເງິນສົດ) | ຂາຍ |
|---|---|---|
| USD ໂດລາ ສະຫະລັດ | ▼ 22,322 | ▼ 22,662 |
| THB ບາດ ໄທ | ▼ 665.72 | ▼ 679.01 |
| CNY ຢວນ ຈີນ | ▼ 3,341 | ▼ 3,407 |
| EUR ເອີໂຣ | ▲ 24,481 | ▲ 24,971 |
| VND ດົ່ງ ຫວຽດນາມ | 0.86 | 0.87 |
| JPY ເຢັນ ຍີ່ປຸ່ນ | ▲ 139.79 | ▲ 142.57 |
| SGD ໂດລາ ສິງກະໂປ | ▲ 16,964 | ▲ 17,636 |
| GBP ປອນ ອັງກິດ | ▼ 29,183 | ▼ 29,766 |

ສະເລ່ຍທະນາຄານ (ທຫລ): USD ຊື້ 22,438 · ຂາຍ 22,661 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

## ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

**41,430,000**

▲ 760,000

ຄຳແທ່ງ 99.99% · 1 ກຣາມ

**2,694,400**

▲ 20,400

ອັບເດດ 24/11 05:30 · mahaxan.com/today/gold

## ຫວຍພັດທະນາ

ງວດ 202

ອອກວັນທີ 23/11/2026

**575791**

| | |
|---|---|
| ງວດ 201 · 20/11 | 603947 |
| ງວດ 200 · 19/11 | 928727 |
| ງວດ 199 · 18/11 | 265341 |
| ງວດ 198 · 17/11 | 489441 |

## ພະຍາກອນອາກາດ

ວັນອັງຄານ 24 ພະຈິກ 2026

| ເມືອງ | ຕ່ຳ–ສູງ | ສະພາບ |
|---|---|---|
| ວຽງຈັນ | 20.3–28.0°C | ເມກບາງສ່ວນ |
| ຫຼວງພະບາງ | 19.8–24.8°C | ມີຝົນ |
| ໂພນສະຫວັນ | 14.0–22.1°C | ເມກບາງສ່ວນ |
| ຊຳເໜືອ | 12.2–16.8°C | ມີເມກຫຼາຍ |
| ສະຫວັນນະເຂດ | 20.7–28.2°C | ເມກບາງສ່ວນ |
| ປາກເຊ | 22.9–30.0°C | ເມກບາງສ່ວນ |

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

**ຕົວເລກປ່ຽນທຸກມື້ — ເບິ່ງສົດ**

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ກິລາ · 10:23 ໂມງ · ອ່ານ 6 ຄັ້ງ

# ຮັບນ້ອງໃໝ່ແບບຈຸກໆ! “ຫົ່ງແດງ” ຖະຫຼໍ່ມ “ຜີແດງ” 4-0 ຂາຍໜ້າບໍ່ພໍ ຍັງຖືບສົ່ງລົ່ງໄປນອນຢູ່ໂຊນຕົກຊັ້ນ!




ລິເວີພູລ ເປີດສະໜາມແອນຟິລດ໌ ຕ້ອນຮັບການມາຢາມຂອງຄູ່ແຄ້ນຕະຫຼອດການຢ່າງ ແມນເຊສເຕີ ຢູໄນເຕັດ ໃນເສິກແດງເດືອດ ພຣີເມຍລີກ ອັງກິດ ນັດທີ 11 ເມື່ອຄືນວັນອາທິດທີ 22 ພະຈິກ 2026 ທີ່ຜ່ານມາ ໂດຍເກມນີ້ເປັນການປະເດີມຄຸມທີມນັດທຳອິດຂອງ ເມົາຣິຊິໂອ ໂປເຊັດຕິໂນ ກັບທັບ "ຜີແດງ" ແຕ່ກາຍເປັນວ່າເຈົ້າບ້ານບໍ່ໄວ້ໜ້າ ຈັດການຮັບນ້ອງໃໝ່ແບບບໍ່ເກງໃຈໃຜ ໄລ່ຖະຫຼໍ່ມເອົາຊະນະໄປແບບຂາດລອຍ 4-0!

ເກມຈົບໄວກວ່າທີ່ຄິດ ເພາະໃບແດງຕັ້ງແຕ່ຍັງບໍ່ທັນໄດ້ເຫື່ອ

ເລີ່ມເກມມາໄດ້ພຽງ 8 ນາທີ ແຟນບານຜີແດງກໍຕ້ອງກຸມຂະມັບ ເມື່ອ ເລນີ ໂຢໂຣ ໄປເຮັດຟາວໜັກຈົນຖືກໃບແດງໄລ່ອອກຈາກສະໜາມ ເຮັດໃຫ້ທີມຢາມເຫຼືອຜູ້ຫຼິ້ນພຽງ 10 ຄົນ ຫຼັງຈາກນັ້ນພຽງ 2 ນາທີ (ນາທີ 10) ໂດມີນິກ ໂຊບອສໄລ ກໍຈັດການປັ່ນຟຣີຄິກສຸດງາມໃຫ້ ລິເວີພູລ ຂຶ້ນນຳ 1-0 ແບບງ່າຍດາຍ

ບຸກຢູ່ຝ່າຍດຽວ ຈົນຜີແດງໂງ່ຫົວບໍ່ຂຶ້ນ

ພໍໄດ້ປະຕູຂຶ້ນນຳ ຫົ່ງແດງກໍຍິ່ງໄດ້ໃຈ ນາທີ 13 ໂຟລຣຽນ ເວຍທ໌ ມາບອກປະຕູເພີ່ມໃຫ້ທີມໜ້າຫ່າງເປັນ 2-0 ກ່ອນຈະຈົບເຄິ່ງທຳອິດໄປດ້ວຍສະກໍນີ້

ເຂົ້າສູ່ເຄິ່ງຫຼັງ ສະຖານະການຂອງ ແມນຢູກໍຍັງບໍ່ມີຫຍັງດີຂຶ້ນ ມີແຕ່ລໍຖ້າເວລາເສຍປະຕູເພີ່ມ ຈົນມາຮອດນາທີ 66 ດາວຮຸ່ງຢ່າງ ຣິໂອ ເອັນກູໂມຮາ ກໍມາຍິງໃຫ້ເຈົ້າບ້ານນຳຫ່າງ 3-0 ແລະ ປິດທ້າຍຄວາມເຈັບປວດໃນນາທີ 82 ຈາກ ບຶກຕໍ ມຸນຍອຊ ຈົບເກມ ລິເວີພູລ ຖະຫຼໍ່ມ ແມນເຊສເຕີ ຢູໄນເຕັດ ໄປ 4-0 ເກັບ 3 ຄະແນນເຕັມແບບຊິວໆ

ສະຫຼຸບສະຖານະການຫຼັງເກມ: ຄົນໜຶ່ງລຸ້ນແຊ້ມ ອີກຄົນລຸ້ນໜີຕົກຊັ້ນ

ລິເວີພູລ: ເກັບເພີ່ມເປັນ 21 ຄະແນນ ຂຶ້ນໄປຢູ່ອັນດັບ 4 ຂອງຕາຕະລາງ ຍັງຄົງຢູ່ໃນເສັ້ນທາງລຸ້ນແຊ້ມຢ່າງເຕັມຕົວ

ແມນເຊສເຕີ ຢູໄນເຕັດ: ມີ 8 ຄະແນນເທົ່າເດີມ ຫຼົ່ນໄປຢູ່ ອັນດັບ 19 (ຮອງບ໊ວຍ) ຂອງຕາຕະລາງ ຈົນ "ໂປເຊັດຕິໂນ" ຕ້ອງອອກມາຍອມຮັບຫຼັງເກມວ່າ ຕອນນີ້ທີມກຳລັງດິ້ນຮົນໜີຕົກຊັ້ນຢ່າງເຕັມຮູບແບບ!

ສຳລັບນັດລ້າງຕາຂອງເສິກແດງເດືອດ ຈະກັບມາເຕະກັນອີກຄັ້ງທີ່ ສະໜາມ ໂອລ ແທຣຟອດ ໃນວັນທີ 24 ມັງກອນ 2027 ຊຶ່ງຕ້ອງມາລຸ້ນກັນວ່າ ຮອດມື້ນັ້ນ ແມນຢູ ຈະໜີອອກຈາກໂຊນຕົກຊັ້ນໄດ້ແລ້ວຫຼືຍັງ!

ໂຄສະນາ

## ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

## ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

**ມະຫາສານ ລາຍວັນ** ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນຈັນ 23 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.